*Journal of Science and Teacher Education (JLSTE), 1*(1), 107-119

# ການນຳໃຊ້ກິດຈະກຳບົດບາດສົມມຸດເພື່ອພັດທະນາທັກສະການເວົ້າພາສາອັງກິດ ສຳລັບນັກຮຽນຊັ້ນມັດທະຍົມສຶກສາ ປີທີ 6 ຂອງໂຮງຮຽນມັດທະຍົມສາທິດ ວິທະຍາໄລຄູສາລະວັນ

*ນ ພິດສາຄອນ ຕານສະຫວັດ**

ພະແນກບໍລິຫານ ແລະ ການເງິນ, ວິທະຍາໄລຄູສາລະວັນ

---

**ບົດຄັດຫຍໍ້**

ການວິໄຈຄັ້ງນີ້ມີຈຸດປະສົງເພື່ອ 1) ເພື່ອປຽບທຽບທັກສະການສົນທະນາພາສາອັງກິດເພື່ອການສື່ສານກ່ອນ ແລະຫຼັງການໃຊ້ກິດຈະກຳບົດບາດສົມມຸດ 2) ເພື່ອສຶກສາຄວາມເພິ່ງພໍໃຈຂອງນັກຮຽນຊັ້ນມັດທະຍົມສຶກສາປີທີ 6 ທີ່ມີຕໍ່ກິດຈະກຳບົດບາດສົມມຸດເພື່ອພັດທະນາທັກສະການສົນທະນາພາສາອັງກິດເພື່ອການສື່ສານ,ກຸ່ມຕົວຢ່າງໃນຄັ້ງນີ້ແມ່ນນັກຮຽນຊັ້ນມັດທະຍົມສຶກສາ ປີທີ6 ຈຳນວນ 30 ຄົນ. ເຄື່ອງມືທີ່ໃຊ້ໃນການທົດລອງ ແລະເກັບກຳຂໍ້ມູນຄື 1) ແຜນການຈັດການຮຽນການສອນໂດຍໃຊ້ກິດຈະກຳບົດບາດສົມມຸດຈຳນວນ 4 ແຜນ 2) ແບບທົດສອບວັດທັກສະການສົນທະນາພາສາອັງກິດເພື່ອການສື່ສານ ກ່ອນ ແລະ ຫຼັງ ຈຳນວນ 4 ວັນ,ວັນລະ 2 ຊົ່ວໂມງ ລວມທັງໝົດ 8 ຊົ່ວໂມງ, ສະຖິຕິທີ່ໃຊ້ໄດ້ແກ່, ເປີເຊັນ,ຄ່າສະເລ່ຍ T- Test ແລະ ຄ່າບ່ຽງເບນມາດຕະຖານ. ຜົນການວິໄຈພົບວ່າ 1) ທັກສະການເວົ້າພາສາອັງກິດເພື່ອການສື່ສານຫຼັງຮຽນໂດຍໃຊ້ກິດຈະກຳບົດບາດສົມມຸດສູງກວ່າກ່ອນຮຽນໃນລະດັບ .05 ແລະ 2) ນັກຮຽນມີຄວາມເພິ່ງພໍໃຈຕໍ່ບົດບາດສົມມຸດເພື່ອພັດທະນາທັດສກການເວົ້າພາສາອັງກິດເພື່ອການສື່ສານຢູ່ໃນລະດັບຄວາມເພິ່ງພໍໃຈຫຼາຍທີ່ສຸດ (Mean = 4.75, S.D. = 0.42).

***ຄຳສັບສຳຄັນ:*** *ທັກສະ, ບົດບາດສົມມຸດ, ຄວາມເພິ່ງພໍໃຈ*

---

**ຕິດຕໍ່ພົວພັນ: ນ ພິດສາຄອນ ຕານສະຫວັດ, ໂທ: 020 98478878; ອີເມວ: phitsakhone85@gmail.com*

# Using Role-Playing Activities to Develop English Speaking Skills for Students Grade 11 at Sathid Secondary School of Salavan Teacher Training College

*Phitsakhone TANSAVATH**
*Administration and Finance Department , Salavan Teacher Training College*

## Abstract

The purposes of this research were 1) to compare English Conversation skills for communication before and after using role play and 2) to study the students' satisfaction of role plays to improve speaking skill for communication of students M6 at Sathid Secondary School. The subject consisted of 30 of students M6 at Sathid Secondary School. The instruments used for gathering data were: 1) four role-play lesson plans, 2) pre-post- tests of English conversation skills for communication, and 3) the questionnaire for collecting students' satisfaction of role play. The experiment was conducted in 4 days, 8 hours in total. The independent t-test, mean and standard deviation (S.D.) were used to analyze data. The study found that the English conversation skills for communication after using role play of the experimental group was significantly higher at .05 significant level; and 2) students indicated their overall satisfaction toward role play at the highest level. (Mean = 4.75, S.D. = 0.42)

***Key words:*** *Communication Skill, Role play, satisfaction*

## 1. ພາກສະເໜີ

*1.1 ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ*

ພາສາອັງກິດນັບວ່າເປັນພາສາສາກົນທີ່ສຳຄັນທີ່ສຸດໃນໂລກ ມີການນຳໃຊ້ຢ່າງແຜ່ຫຼາຍ ແລະມີບົດບາດສຳຄັນໃນຊີວິດປະຈຳວັນຂອງຜູ້ຄົນຈຳນວນຫຼາຍ ໂດຍສະເພາະໃນຍຸກທີ່ເຕັກໂນໂລຊີກ້າວໜ້າ ແລະເປັນຍຸກຂອງຂໍ້ມູນຂ່າວສານ ພາສາອັງກິດຈຶ່ງມີຄວາມຈຳເປັນສຳລັບການສື່ສານ, ການສຶກສາ ແລະການສ້າງສາຍສຳພັນໃນລະດັບສາກົນ ນອກຈາກນີ້ ພາສາອັງກິດຍັງເປັນເຄື່ອງມືສຳຄັນໃນການພັດທະນາປະເທດຊາດ ແລະເຜີຍແຜ່ວັດທະນະທຳຂອງຊາດອອກສູ່ສາກົນ ໂດຍສະເພາະໃນປະຊາຄົມອາຊຽນ (ASEAN) ປະເທດລາວເປັນສ່ວນໜຶ່ງຂອງປະຊາຄົມໂລກທີ່ມີການຮ່ວມມືກັນໃນຫຼາຍດ້ານ ເຊັ່ນ: ເສດຖະກິດ, ຄວາມໝັ້ນຄົງ, ສັງຄົມ ແລະ ວັດທະນະທຳ ດັ່ງນັ້ນ, ການພັດທະນາການສຶກສາພາສາອັງກິດໃຫ້ມີປະສິດທິພາບຈຶ່ງມີຄວາມສຳຄັນຫຼາຍ ເພື່ອໃຫ້ຜູ້ຮຽນມີທັກສະທີ່ຈະນຳໄປໃຊ້ໃນຊີວິດປະຈຳວັນ ແລະ ເພື່ອຕອບສະໜອງຄວາມຕ້ອງການຂອງໂລກໃນສັດຕະວັດທີ 21 ເພື່ອໃຫ້ຜູ້ຮຽນກ້າວທັນສັງຄົມໃນປັດຈຸບັນ.

ໃນການສອນທັກສະການເວົ້າສຳລັບຊັ້ນມັດທະຍົມ Schickedanz ແລະ York (1997) ໄດ້ເວົ້າວ່າ ທັກສະດ້ານພາສານັ້ນມີຫຼາຍສ່ວນ ເຊັ່ນ: ການເວົ້າ, ການຟັງ, ການອ່ານ ແລະ ການຂຽນ ແລະ ຈະເປັນການດີຖ້າຄູອາຈານມີຄວາມເຂົ້າໃຈໃນການອອກແບບແລະວາງແຜນການສອນໃນແຕ່ລະລະດັບຂອງທັກສະເຫຼົ່ານີ້. ໂດຍໃນການວິໄຈນີ້ຈະສຸມໃສ່ການສຶກສາທັກສະການເວົ້າເປັນພິເສດ ເຊິ່ງໝາຍເຖິງຄວາມສາມາດໃນການນຳໃຊ້ພາສາເພື່ອສື່ສານ ແລະ ແລກປ່ຽນຂໍ້ມູນຂ່າວສານ (Brown, 2007; Burns & Joyce, 1997) ເຊິ່ງມີອົງປະກອບທີ່ຫຼາກຫຼາຍ ອົງປະກອບຄື: ການພັດທະນາດ້ານຄຳສັບນັກຮຽນຈຳເປັນຕ້ອງຮຽນຮູ້ຄຳສັບເພື່ອໃຊ້ໃນການເອີ້ນຊື່ສິ່ງຂອງກິລິຍາ ແລະ ອື່ນໆ ອົງປະກອບທີ່ສອງຄື: ການພັດທະນາທັກສະການເວົ້າທີ່ຖືກຕ້ອງກໍຄື: ຜູ້ຮຽນຕ້ອງມີຄວາມຮູ້ດ້ານພາສາເຊິ່ງປະກອບດ້ວຍ ຄວາມຮູ້ກ່ຽວກັບປະເພດຂອງພາສາ (genre knowledge) ແບ່ງຕາມຈຸດປະສົງໃນການໃຊ້ພາສາທີ່ສາມາດແບ່ງໄດ້ເປັນ 2 ປະເພດຄື 1) ພາສາເພື່ອການດຳເນີນການ (transactional function) ເຊິ່ງແມ່ນພາສາທີ່ໃຊ້ສຳລັບການສື່ສານເພື່ອຈຸດປະສົງໃດໜຶ່ງ ແລະ 2) ພາສາເພື່ອສ້າງສາຍສຳພັນ (interpersonal function) ເຊິ່ງແມ່ນພາສາທີ່ໃຊ້ສຳລັບສ້າງຄວາມສຳພັນກັບຄົນອື່ນ ເຊິ່ງລວມເຖິງຄວາມຮູ້ດ້ານວັດທະນະທຳ- ສັງຄົມ, ການໃຊ້ພາສາທີ່ເໝາະສົມກັບສະຖານະການ ແລະ ບຸກຄົນ ຄວາມຮູ້ດ້ານສັງຄົມຈຶ່ງເປັນໄດ້ທັງຄວາມຮູ້ທີ່ກ່ຽວຂ້ອງກັບພາສາ ແລະນອກຈາກນັ້ນ Thornberry (2011) ໄດ້ເວົ້າເຖິງອົງປະກອບທີ 3 ຄື: ການພັດທະນາການພູດໃນຮູບແບບປະໂຫຍກ ແລະ ກົດການໃຊ້ພາສາເຊິ່ງເອີ້ນວ່າ: ການພັດທະນາກ່ຽວກັບການສ້າງປະໂຫຍກ, ອົງປະກອບທີ່ 4 ໝາຍເຖິງການສະແດງອອກເຊິ່ງຄວາມຮູ້ສຶກທີ່ນັກຮຽນຕ້ອງການຈະເວົ້າ ແລະ ອົງປະກອບສຸດທ້າຍຄື ທັກສະໃນການສື່ສານກຸ່ມເຊິ່ງໝາຍເຖິງການມີປະຕິສຳພັນທາງສັງຄົມທີ່ດີກັບຄົນອື່ນການສະແດງອອກທາງກິລິຍາມາລະຍາດສັງຄົມທີ່ເໝາະສົມ ໂດຍຄູອາຈານຄວນພິຈາລະນາເຖິງວິທີການສອນທີ່ງ່າຍສຳລັບນັກຮຽນ ແລະ ສະຖານະການທີ່ສົ່ງເສີມຄວາມໝັ້ນໃຈໃນການເວົ້າເພື່ອສື່ສານຂອງນັກຮຽນອີກດ້ວຍ . ກິດຈະກຳບົດບາດສົມມຸດເປັນໜຶ່ງໃນວິທີການທີ່ຊ່ວຍໃນການພັດທະນາການຮຽນການສອນພາສາເພື່ອການສື່ສານໃຫ້ປະສົບຜົນສຳເລັດຫຼາຍຂຶ້ນ ເຊິ່ງ (Maier, 2002; Rao & Stupans, 2012).ເວົ້າວ່າ ການສະແດງບົດບາດສົມມຸດເປັນການສ້າງເຕັກນິກທີ່ດີໃນການກຽມພ້ອມກ່ອນການຝຶກຝົນໃນການສື່ສານທາງພາສາໃນທາງດຽວກັນ ແລະບົດບາດສົມມຸດວ່າເປັນການສະແດງອອກທີ່ເປັນໄປຕາມທຳມະຊາດຂອງບຸກຄົນແຕ່ລະຄົນທີ່ຕອບສະໜອງຕໍ່ຜູ້ອື່ນໃນສະຖານະການທີ່ສົມມຸດຂຶ້ນມາ ເຊິ່ງບົດບາດສົມມຸດເປັນໜຶ່ງໃນກິດຈະກຳທີ່ຜູ້ມີສ່ວນຮ່ວມຫຼືຜູ້ສະແດງຮູ້ວ່າເນື້ອໃນ ຫຼືຫົວຂໍ້ກ່ຽວຂ້ອງກັບຫຍັງ ຫຼື ຈະຕ້ອງຮູ້ຂໍ້ມູນກ່ອນເພື່ອສະແດງອອກໃນຮູບແບບການ

ຝຶກ ນອກຈາກນັ້ນ Richards (2006) ເວົ້າເຖິງບົດບາດສົມມຸດວ່າເປັນກິດຈະກຳທີ່ຜູ້ຮຽນຖືກກຳນົດບົດບາດແລະສະຖານະການທີ່ກຽມມາກ່ອນ ຫຼື ການແລກປ່ຽນຂໍ້ມູນທີ່ຍຶດຂໍ້ມູນຫຼືບົດບາດທີ່ໃຫ້ມາເປັນຫຼັກຄື: ການສະແດງບົດບາດສົມມຸດ (Role Play) ເປັນກິດຈະກຳການຮຽນການສອນພາສາອັງກິດເພື່ອການສື່ສານຊຶ່ງເນັ້ນການສອນໂດຍໃຊ້ບົດບາດທີ່ຖືກສົມມຸດຂຶ້ນມາຈາກສະຖານະການໃດໜຶ່ງທີ່ໃກ້ຄຽງກັບຄວາມເປັນຈິງ ໂດຍມີຈຸດປະສົງເພື່ອໃຫ້ຜູ້ຮຽນໃຊ້ພາສາເພື່ອການສື່ສານຕາມບົດບາດທີ່ຕົນໄດ້ຮັບ ເຊິ່ງການໃຫ້ຜູ້ຮຽນສະແດງບົດບາດສົມມຸດນັ້ນເພື່ອໃຫ້ເກີດຄວາມໜ້າສົນໃຈຫຼາຍຂຶ້ນ ຄູອາຈານອາດຈະໃຫ້ຜູ້ຮຽນມີສ່ວນເປັນຜູ້ກຳນົດບົດສົນທະນາແລະບົດບາດຂອງແຕ່ລະຄົນໂດຍກຳນົດວ່າຜູ້ຮຽນຈະສະແດງເປັນໃຜ ແລະ ຈະເວົ້າຢ່າງໃດແດ່, ເວົ້າກ່ຽວກັບຫຍັງ ແຕ່ສິ່ງທີ່ຈະເວົ້າຄູອາຈານເປັນຜູ້ກຳນົດ ຫຼື ອາດເປີດໂອກາດໃຫ້ຜູ້ຮຽນຄິດເອງໂດຍຄູອາຈານໃຫ້ຄວາມຊ່ວຍເຫຼືອໃນການກວດກາຄວາມຖືກຕ້ອງຂອງການໃຊ້ພາສາ ການສະແດງບົດບາດສົມມຸດຈຶ່ງເປັນກິດຈະກຳທີ່ເອື້ອອຳນວຍໃຫ້ຜູ້ຮຽນໄດ້ໃຊ້ທັກສະທາງພາສາ ແລະ ມີຄວາມສຳຄັນໃນການຝຶກທັກສະການເວົ້າພາສາອັງກິດ ອີກທັງຜູ້ຮຽນສາມາດນຳໄປປະຍຸກໃຊ້ໃນຊີວິດຈິງໄດ້.

ດ້ວຍເຫດຜົນນີ້,ການຄົ້ນຄວ້າຄັ້ງນີ້ມີຈຸດປະສົງເພື່ອສຶກສາຄົ້ນຄວ້າຫາວິທີການໃນການພັດທະນາທັກສະການເວົ້າພາສາອັງກິດເພື່ອການສື່ສານ ເຊິ່ງກິດຈະກຳບົດບາດສົມມຸດເປັນກິດຈະກຳການຮຽນການສອນທີ່ນັກຮຽນໄດ້ຝຶກຝົນການໃຊ້ພາສາໃນສະຖານະການທີ່ໃກ້ຄຽງກັບຄວາມເປັນຈິງ ດັ່ງນັ້ນຈຶ່ງໄດ້ນຳເອົາວິທີການຈັດການຮຽນການສອນນີ້ມານຳໃຊ້ ເພື່ອເປັນການພັດທະນາທັກສະການເວົ້າພາສາອັງກິດໃຫ້ແກ່ນັກຮຽນຊັ້ນມັດທະຍົມສຶກສາປີທີ 6 ໂດຍມີເນື້ອໃນທີ່ສຶກສາມາຈາກຫຼັກສູດການຮຽນພາສາຕ່າງປະເທດລະດັບມັດທະຍົມສຶກສາປີທີ 6 ເຊິ່ງສອດຄ່ອງກັບຈຸດປະສົງຂອງວິຊາພາສາອັງກິດລະດັບຊັ້ນມັດທະຍົມສຶກສາປີທີ 6 ແລະ ຈະໄດ້ນຳເອົາຜົນການວິໄຈໃນຄັ້ງນີ້ໄປນຳໃຊ້ໃນການສ້າງບົດຮຽນບົດບາດສົມມຸດເພື່ອພັດທະນາທັກສະການເວົ້າພາສາອັງກິດເພື່ອການສື່ສານໃຫ້ມີປະສິດທິພາບ ເພື່ອໃຫ້ນັກຮຽນໄດ້ຝຶກຝົນການໃຊ້ພາສາຜ່ານກິດຈະກຳບົດບາດສົມມຸດ ແລະ ເພື່ອໃຫ້ນັກຮຽນມີທັດສະນະຄະຕິທີ່ດີຕໍ່ການຮຽນການສອນ ແລະ ການພັດທະນາທັກສະພາສາອັງກິດເພື່ອການສື່ສານ.

*1.2. ຄຳຖາມຂອງການຄົ້ນຄ້ວາ*

1. ທັກສະການສົນທະນາພາສາອັງກິດຂອງນັກຮຽນຊັ້ນມັດທະຍົມສຶກສາປີທີ 6 ຫຼັງຈາກການນຳໃຊ້ກິດຈະກຳບົດບາດສົມມຸດ ມີຄະແນນສູງຂຶ້ນກວ່າກ່ອນການນຳໃຊ້ ຫຼື ບໍ່?

2. ນັກຮຽນຊັ້ນມັດທະຍົມສຶກສາປີທີ 6 ມີຄວາມເພິ່ງພໍໃຈຕໍ່ບົດຮຽນທີ່ໃຊ້ກິດຈະກຳບົດບາດສົມມຸດ ເພື່ອພັດທະນາທັກສະການສົນທະນາພາສາອັງກິດເພື່ອການສື່ສານຢູ່ໃນລະດັບໃດ?

*1.3. ຈຸດປະສົງຂອງການຄົ້ນຄ້ວາ*

1. ເພື່ອປຽບທຽບທັກສະການສົນທະນາພາສາອັງກິດເພື່ອການສື່ສານຂອງນັກຮຽນຊັ້ນມັດທະຍົມສຶກສາປີທີ 6 ກ່ອນ ແລະ ຫຼັງການນຳໃຊ້ກິດຈະກຳບົດບາດສົມມຸດ.

2. ເພື່ອສຶກສາຄວາມເພິ່ງພໍໃຈຂອງນັກຮຽນຊັ້ນມັດທະຍົມສຶກສາປີທີ 6 ຕໍ່ບົດຮຽນທີ່ໃຊ້ກິດຈະກຳບົດບາດສົມມຸດເພື່ອພັດທະນາທັກສະການເວົ້າພາສາອັງກິດເພື່ອການສື່ສານສຳລັບນັກຮຽນຊັ້ນມັດທະຍົມສຶກສາປີທີ 6.

## 2. ບົດຄົ້ນຄວ້າທີ່ກ່ຽວຂ້ອງ

ການວິໄຈທີ່ກ່ຽວຂ້ອງກັບການນຳໃຊ້ກິດຈະກຳບົດບາດສົມມຸດເພື່ອພັດທະນາຄວາມສາມາດໃນການສົນທະນາພາສາອັງກິດ, ຈາກການສຶກສາການວິໄຈທີ່ກ່ຽວຂ້ອງກັບການພັດທະນາການສົນທະນາພາສາອັງກິດເພື່ອການສື່ສານໂດຍການນຳໃຊ້ບົດບາດສົມມຸດສາມາດລວບລວມ ໄດ້ດັ່ງລາຍລະອຽດຕໍ່ໄປນີ້:

ສອດຄ່ອງກັບບົດຄົ້ນຄວ້າທ່ານ ນາງ ລັດຊະຍາ ບຸບຜາຊາດ ເຊິ່ງທ່ານໄດ້ສຶກສາກ່ຽວກັບການໃຊ້ກິດຈຳກຳບົດບາດສົມມຸດເພື່ອພັດທະນາທັກສະການເວົ້າພາສາອັງກິດເພື່ອການສື່ສານສຳລັບນັກຮຽນຊັ້ນມັດທະຍົມສຶກສາປີທີ 4 ໂຮງຮຽນຍໍແຊບອຸປະຖຳ ແຂວງນະຄອນປະຖົມປະເທດໄທ ປີ 2018 ເຊິ່ງຜົນຄົ້ນຄວ້າແມ່ນກ່ອນຮຽນມີຄະແນນສູງສຸດ 13 ຄະແນນ ແລະຕໍ່າສຸດ 8 ຄະແນນ ແລະເມື່ອປຽບທຽບຜົນການຮຽນຫຼັງການຮຽນການສອນບົດບາດສົມມຸດຜົນຄະແນນສູງສຸດ 19 ຄະແນນ ແລະຕໍ່າສຸດ 15 ຄະແນນ ຈາກຄະແນນເຕັມ 20 ຄະແນນ ສະນັ້ນຈຶ່ງສະຫຼຸບໄດ້ວ່າຜົນການຮຽນກ່ອນຮຽນແມ່ນມີຄ່າສະເລ່ຍ ເທົ່າກັບ 10.30 ແລະ ຄ່າຜັນປ່ຽນມາດຕະຖານ ແມ່ນເທົ່າກັບ 1.03 ແລະຄະແນນຫຼັງຮຽນມີຄ່າສະເລ່ຍເທົ່າກັບ 17.30 ແລະຄ່າຜັນປ່ຽນມາດຕະຖານແມ່ນ 0.59 ສະນັ້ນບົດຄົ້ນຄວ້າຂອງຂ້າພະແມ່ນການການນຳໃຊ້ກິດຈະກຳບົດບາດສົມມຸດເພື່ອພັດທະນາທັກສະການເວົ້າພາສາອັງກິດສຳລັບຊັ້ນມັດທະຍົມສຶກສາປີທີ 6ຂອງໂຮງຮຽນມັດທະຍົມສາທິດວິທະຍາໄລຄູສາລະວັນ ເຊິ່ງມີຄ່າສະເລ່ຍກ່ອນຮຽນເທົ່າກັບ 10.33 ແລະຄ່າຜັນປ່ຽນມາດຕະຖານເທົ່າກັບ 1.06, ແລະຄະແນນຫຼັງຮຽນ 17.30 ແລະຄ່າຜັນປ່ຽນມາດຕະຖານເທົ່າກັບ 0.95 ແລະ ຄ່າຄວາມກ້າວໜ້າເທົ່າກັບ 6.9 ສະນັ້ນຈຶ່ງສາມາດສະຫຼຸບໄດ້ວ່າການວິເຄາະຜົນການຮຽນກ່ອນແລະຫຼັງການນຳໃຊ້ກິດຈະກຳບົດບາດສົມມຸດແມ່ນນັກຮຽນມີຄວາມກ້າວໜ້າໃນລະດັບດີຫຼາຍ.

ສອດຄ່ອງກັບການຄົ້ນຄວ້າຂອງ ນຸດຈີ ພູເງິນ (ຄ.ສ. 2013) ທີ່ໄດ້ດຳເນີນການຄົ້ນຄວ້າກ່ຽວກັບການພັດທະນາຄວາມສາມາດໃນການສົນທະນາພາສາອັງກິດໂດຍການນຳໃຊ້ກິດຈະກຳບົດບາດສົມມຸດ ຂອງນັກຮຽນລະດັບປະກາສະນີຍະບັດວິຊາຊີບຊັ້ນປີທີ 3 ສາຂາວິຊາຄອມພິວເຕີທຸລະກິດ ໂຮງຮຽນກຸງເທບການບັນຊີວິທະຍາໄລ ປີການສຶກສາ 2012 ຈຳນວນ 22 ຄົນ ໂດຍກາສຸ່ມເອົາຕົວຢ່າງ ໂດຍໃຊ້ເຄື່ອງມືໃນການເກັບຂໍ້ມູນດັ່ງນີ້ 1) ແບບທົດສອບວັດແທກຄວາມສາມາດໃນການສົນທະນາ 2) ແບບ

ບັນທຶກພຶດຕິກຳການສົນທະນາຂອງນັກຮຽນ ໃນການລວບລວມຂໍ້ມູນມີຂັ້ນຕອນດັ່ງນີ້ 1) ທົດສອບຄວາມສາມາດດ້ານການສົນທະນາພາສາອັງກິດຂອງນັກຮຽນກ່ອນການທົດລອງ 2) ຄູອາຈານສອນຕາມແຜນການຈັດການຮຽນການສອນໂດຍການນຳໃຊ້ກິດຈະກຳບົດບາດສົມມຸດ ຜູ້ຄົ້ນຄວ້າໄດ້ດຳເນີນການສອນ 3) ສັງເກດພຶດຕິກຳການສົນທະນາຂອງນັກຮຽນໂດຍໃຊ້ແບບສັງເກດພຶດຕິກຳດ້ານການສົນທະນາ 4) ທົດສອບຄວາມສາມາດດ້ານການສົນທະນາພາສາອັງກິດຂອງນັກຮຽນຫຼັງການທົດລອງໂດຍໃຊ້ແບບທົດສອບວັດແທກຄວາມສາມາດດ້ານການສົນທະນາພາສາອັງກິດຊຸດດຽວກັນກັບກ່ອນການທົດລອງ ຜົນການຄົ້ນຄວ້າພົບວ່າຄະແນນການສົນທະນາພາສາອັງກິດຂອງນັກຮຽນກ່ອນການສອນໂດຍການນຳໃຊ້ບົດບາດສົມມຸດໄດ້ 1-2 ຄະແນນ ມີຄ່າສະເລ່ຍເປັນ 1.47 ຄະແນນ ສ່ວນການສົນທະນາພາສາອັງກິດ ຫຼັງການນຳໃຊ້ບົດບາດສົມມຸດໄດ້ 3-8 ຄະແນນ ມີຄ່າສະເລ່ຍເປັນ 4.47 ຄະແນນ ແລະ ເມື່ອພິຈາລະນາຄະແນນການພັດທະນາ ພົບວ່ານັກຮຽນທຸກຄົນໃນກຸ່ມຕົວຢ່າງມີການພັດທະນາທີ່ດີຂຶ້ນ ຄືໄດ້ຮ້ອຍລະ 16.57-75.00 ຄ່າສະເລ່ຍເປັນຮ້ອຍລະ 34.89 ແລະພຶດຕິກຳຂອງນັກຮຽນຈະເກີດທັກສະໃນການສົນທະນາພາສາອັງກິດ ນັກຮຽນມີການພັດທະນາທັກສະການສົນທະນາພາສາອັງກິດໄດ້ຢ່າງຖືກຕ້ອງ ແລະ ເຮັດໃຫ້ມີຄວາມໝັ້ນໃຈໃນການອ່ານອອກສຽງ ອີກທັງຍັງຊ່ວຍໃຫ້ນັກຮຽນເກີດຄວາມເຂົ້າໃຈໃນການຮຽນຫຼາຍຂຶ້ນ.

ກັນນິກາ ການຈັນດາ (ຄ.ສ. 2007) ໄດ້ດຳເນີນການຄົ້ນຄວ້າກ່ຽວກັບການນຳໃຊ້ກິດຈະກຳບົດບາດສົມມຸດຕາມແນວທິດການສອນພາສາເພື່ອການສື່ສານ ເພື່ອພັດທະນາຄວາມສາມາດໃນການຟັງ ການສົນທະນາພາສາອັງກິດ ແລະ ແຮງຈູງໃຈ ສຳລັບນັກຮຽນຊັ້ນມັດທະຍົມສຶກສາປີທີ 3 ໂຮງຮຽນພິງຄັນ ເມືອງຊຽງໃໝ່ ຈຳນວນ 12 ຄົນ ຜົນການຄົ້ນຄວ້າພົບວ່າ ນັກຮຽນມີຄວາມສາມາດໃນການຟັງ ການສົນທະນາພາສາອັງກິດຜ່ານເກນທີ່ກຳນົດໄວ້ຄື ຮ້ອຍລະ 60 ແລະ ນັກຮຽນມີແຮງຈູງໃຈເພີ່ມຂຶ້ນຫຼັງຈາກການຮຽນໂດຍການນຳໃຊ້ກິດຈະກຳບົດບາດສົມມຸດຕາມແນວທິດການສອນພາສາເພື່ອການສື່ສານ.

*2.1 ຄວາມໝາຍຂອງບົດບາດສົມມຸດ*

ບົດບາດສົມມຸດ ແມ່ນເຕັກນິກຢ່າງໜຶ່ງທີ່ປ່ອຍໂອກາດໃຫ້ນັກຮຽນຄົ້ນຄວ້າຫາສະພາບການຕົວຈິງໂດຍມີການປະຕິສຳພັນ ຫຼື ພົວພັນກັບຄົນອື່ນໆໃນຮູບແບບທີ່ມີການບໍລິຫານຈັດການຢ່າງດີເພື່ອພັດທະນາປະສົບການ ແລະ ທົດລອງດ້ວຍຍຸດທະສາດທີ່ແຕກຕ່າງກັນໃນສະພາບແວດລ້ອມທີ່ມີຄວາມສະລັບສັບຊ້ອນ. ໃນວິຊາຄູ: ບົດບາດສົມມຸດໄດ້ສະແດງໃຫ້ເຫັນເຖິງປະສິດທິຜົນໃນການບັນລຸຜົນການຮຽນໃນ 3 ຂົງເຂດການຮຽນຮູ້ທີ່ສຳຄັນໄດ້ແກ່: ຜົນກະທົບ, ສະຕິປັນຍາ ແລະ ພຶດຕິກຳ.(Maier, 2002; Rao & Stupans, 2012).

ບົດບາດສົມມຸດ ແມ່ນ ເຕັກນິກການຮຽນການສອນຢ່າງໜຶ່ງ, ຊຶ່ງຄົນເຮົາສະແດງອອກກ່ຽວກັບບັນຫາໃດໜຶ່ງໂດຍທຳມະຊາດ ຂອງການພົວພັນຊຶ່ງກັນແລະກັນ ແລະ ວິເຄາະການປະຕິບັດດ້ວຍການຊ່ວຍ ເຫຼືອຈາກຜູ້ຫຼິ້ນບົດບາດສົມມຸດ ແລະ ຜູ້ສັງເກດການ ອື່ນໆ.

*2.2 ຂັ້ນຕອນການສອນແບບບົດບາດສົມມຸດ*

ກົມສ້າງຄູ, ສະຖາບັນຄົ້ນຄວ້າວະທະສາສາດການສຶກສາ, ສະຖາບັນຜູ້ບໍລິຫານການສຶກສາ ແລະ ກົມສາມັນສຶກສາ (2022, ໜ້າ. 71-53) ໄດ້ສະຫຼຸບຂັ້ນຕອນ, ຈຸດດີ ແລະ ຂໍ້ຈຳກັດຂອງການສອນແບບບົດລາດສົມມຸດດັ່ງນີ້:

ຂັ້ນຕອນການສອນແບບບົດບາດສົມມຸດມີຄື: 1) ກຳນົດບັນຫາ, 2) ສ້າງສະຖານະການ, 3) ກຳນົດບົດບາດ ແລະ ເລືອກຜູ້ເຂົ້າຮ່ວມ, 4) ສະເໜີການສະແດງ, 5) ປະຕິບັດ, 6) ການວິເຄາະແລະປະເມີນຜົນ ແລະໃນແຕ່ລະດ້ານແມ່ນມີຄຳແນະນຳລະອຽດໃນການປະຕິບັດດັ່ງນີ້:

**ລາຍລະອຽດຂອງແຕ່ລະຂັ້ນຕອນ**

1) ກຳນົດບັນຫາ: ຄູຕ້ອງຕັດສິນໃຈຢ່າງແນ່ນອນວ່າກຸ່ມຕ້ອງການຮຽນຮູ້ຫຍັງຈາກການສະແດງບົດບາດສົມມຸດນີ້
2) ສ້າງສະຖານະການໃນການສະແດງບົດບາດສົມມຸດ: ຄູຕ້ອງອອກແບບສະຖານະການໃຫ້ແທດເໝາະກັບຈຸດປະສົງທີ່ຕົນຢາກບັນລຸ.
3) ກຳນົດບົດບາດ ແລະ ຄັດເລືອກເອົາຜູ້ເຂົ້າຮ່ວມ: ຄູຕ້ອງວາງອອກຢ່າງຈະແຈ້ງບົດບາດຂອງນັກຮຽນ ຫຼື ຜູ້ເຂົ້າຮ່ວມທີ່ຖືກຄັດເລືອກ.
4) ສະເໜີການສະແດງ: ຄູຕ້ອງເວົ້າກ່ຽວກັບຈຸດປະສົງຂອງການສະແດງບົດບາດສົມມຸດໃນລະຫວ່າງການນຳສະເໜີ, ອະທິບາຍທັກສະ ແລະ ຄວາມເຂົ້າໃຈທີ່ກິດຈະກຳຄາດຫວັງຈະໄດ້ມາ ຫຼື ໃຫ້ນັກຮຽນເຂົ້າໃຈ.
5) ປະຕິບັດ: ການສະແດງ, ນັກຮຽນຕ້ອງປະຕິບັດພາກສ່ວນຂອງຕົນຕໍ່ກັບການສະແດງບົດບາດສົມມຸດຕາມທີ່ໄດ້ຕົກລົງກັນ ແລະປະຕິບັດສະຖານະການຕາມທີ່ຄູໄດ້ກຳນົດໄວ້.
6) ການວິເຄາະ ແລະ ປະເມີນຜົນ: ຄູ ແລະ ນັກຮຽນຕ້ອງວິເຄາະການສະແດງບົດບາດສົມມຸດໂດຍ:

ກ. ມີສິ່ງໃດເກີດຂຶ້ນ;
ຂ. ເປັນຫຍັງມັນເກີດຂຶ້ນແບບນັ້ນ?
ຄ. ຄວາມຮູ້ສຶກ ແລະ ແຮງຈູງໃຈກ່ຽວຂ້ອງກັບຫຍັງແດ່?;
ງ. ການປ່ຽນແປງອັນໃດທີ່ຈະສ້າງຜົນໄດ້ຮັບອື່ນໆ?

*2.3 ສ້າງບົດບາດສົມມຸດ:*

ໃນການສ້າງການສະແດງບົດບາດສົມມຸດ, ຄູ ຫຼື ກຸ່ມນັກຮຽນຕ້ອງການປະຕິບັດດັ່ງນີ້:

1) ກຳນົດຂອບເຂດເວລາ.
2) ກຳນົດໜ້າວຽກຂອງຜູ້ສັງເກດການ (ຖ້າມີ).
3) ກຳນົດກົດລະບຽບພື້ນຖານດ້ານຄວາມປອດໄພ ແລະ ຄຳຕິຊົມ.
4) ກຳນົດວາລະສຳລັບການຖາມເຈາະຈີ້ມ.

5) ກຳນົດໜ້າວຽກຂອງຜູ້ອຳນວຍຄວາມສະດວກ.

*2.4 ການດຳເນີນການສະແດງບົດບາດສົມມຸດ*

ໃນການດຳເນີນການສະແດງບົດບາດສົມມຸດ, ເມື່ອສິ່ງຕ່າງໆດັ່ງທີ່ກ່າວມາຂ້າງເທິງໄດ້ຖືກກຳນົດແລ້ວ, ຄູຕ້ອງມີສະຕິຕໍ່ກິດລະບຽບດັ່ງຕໍ່ໄປນີ້:

1) ໃຫ້ເວລານັກຮຽນເພື່ອສຶກສາສະຖານະການຕ່າງໆທີ່ຄູມອບໝາຍໃຫ້.
2) ຄູຄວນແຊກແຊງໃຫ້ໜ້ອຍທີ່ສຸດເທົ່າທີ່ຈະເປັນໄປໄດ້, ເຖິງຢ່າງໃດກໍຕາມ, ຖ້າຕ້ອງການຂໍ້ມູນໃໝ່ໃນຂະນະທີ່ກຳລັງດຳເນີນກິດຈະກຳຢູ່, ຈະຕ້ອງໄດ້ມີການກະກຽມລ່ວງໜ້າ.
3) ຄູຄວນກວດເບິ່ງວ່າທຸກໆບົດບາດມີຄວາມທ້າວທັນບໍ?. ຖ້ານັກຮຽນຄົນໃດບໍ່ເຂົ້າຮ່ວມເຖິງວ່າມີໜ້າທີ່ມອບໝາຍໃຫ້ແລ້ວ, ຄູຄວນໂອ້ລົມກັບນັກຮຽນໂດຍກົງ.
4) ຈັດຊັບພະຍາກອນທີ່ມີໃຫ້ກັບນັກຮຽນ, ຊ່ວຍພວກເຂົາໃຫ້ປະກອບສ່ວນໃນການສະແດງບົດບາດສົມມຸດ ແລະ ປະຕິບັດພາລະບົດບາດສະເພາະຂອງພວກເຂົາ.

2.5 ຈຸດດີ ແລະ ຂໍ້ຈຳກັດຂອງບົດບາດສົມມຸດ

*ຈຸດດີຂອງບົດບາດສົມມຸດ*

1) ສະທ້ອນເຖິງຄວາມຮູ້ຂອງເຂົາເຈົ້າກ່ຽວກັບວິຊາຮຽນ. ໃນເມື່ອບົດບາດສົມມຸດແມ່ນວິທີການສິດສອນທີ່ດີ ວິທີໜຶ່ງສຳລັບການທົບທວນໃນສິ່ງທີ່ໄດ້ຮຽນມາໃນຕອນທ້າຍຂອງການຮຽນ.
2) ມັນເຮັດໃຫ້ມີພະລັງໃນການຮຽນ (ທ້າວທັນ)
3) ມັນງ່າຍດາຍ ແລະ ຄ່າໃຊ້ຈ່າຍຕ່ຳ
4) ນຳສະເໜີບັນຫາສັບຊ້ອນໃນປະຈຸບັນແບບງ່າຍໆ ແລະ ໃນເວລາສັ້ນ.
5) ມັນບໍ່ຕ້ອງການອຸປະກອນ ຫຼື ການກະກຽມລ່ວງຫນ້າຫຼາຍ.
6) ຊ່ວຍພັດທະນາຄວາມເປັນຕົວຂອງຕົວເອງ ແລະ ຄວາມໝັ້ນໃຈ.
7) ຊ່ວຍພັດທະນາທັກສະການສື່ສານແທ້ຈິງໃນການນຳພາ, ການສຳພາດ ແລະ ການປະຕິສຳພັນທາງສັງຄົມ.
8) ຊ່ວຍພັດທະນາຄວາມສາມາດໃນການສັງເກດ ແລະ ວິເຄາະສະພາບການ.
9) ໃຫ້ໂອກາດນັກຮຽນໄດ້ສະແດງອອກເຖິງຫົວຄິດປະດິດສ້າງຂອງເຂົາ.
10) ນັກຮຽນໄດ້ປະສົບການທີ່ແຕກຕ່າງກ່ຽວຂ້ອງກັບຊີວິດ ແລະ ສະພາບການສັງຄົມຂອງພວກເຂົາເຈົ້າ.

*ຂໍ້ຈຳກັດຂອງແບບບົດບາດສົມມຸດ*

1) ມັນຮຽກຮ້ອງໃຫ້ມີການຊີ້ນຳ ແລະ ຄວາມເປັນຜູ້ນຳທີ່ຊຳນິຊຳນານ.
2) ບາງຄັ້ງຜູ້ເຂົ້າຮ່ວມອາດຈະຮູ້ສຶກຄືກັບວ່າຖືກບັງຄັບ, ບໍ່ເຕັມໃຈສະແດງ.
3) ມັນຂຶ້ນກັບຈິນຕະນາການຂອງນັກຮຽນເປັນສ່ວນໃຫຍ່.
4) ຜູ້ເຂົ້າຮ່ວມອາດບໍ່ກ້າທີ່ຈະສະແດງອອກ (ອາຍເກີນໄປ).
5) ມັນກາຍເປັນເລື່ອງຍາກສຳລັບຄູທີ່ຈະປະເມີນນັກຮຽນເປັນແຕ່ລະຄົນ.
6) ມັນແມ່ນຂະບວນການທີ່ໃຊ້ເວລາຫຼາຍ.
7) ມັນເປັນຄວາມລົ້ມເຫຼວເມື່ອກຸ່ມນັກຮຽນບໍ່ເຂົ້າໃຈ.

**ສະຫຼຸບ:** ບົດບາດສົມມຸດມີຄຸນລັກສະນະດີເດັ່ນໃນຂະບວນການຮຽນການສອນ, ເຮັດໃຫ້ຂະບວນການຮຽນການສອນມີປະສິດຕິຜົນສູງຂຶ້ນ, ເປັນແບບທຳມະດາທີ່ສຸດ, ສະນັ້ນ ນັກຮຽນຄວນຈະຫຼິ້ນແບບບົດບາດສົມມຸດ (ກົມສ້າງຄູ, ສະຖາບັນຄົ້ນຄວ້າວະທະສາສາດການ ສຶກສາ, ສະຖາບັນຜູ້ບໍລິຫານການສຶກສາ ແລະ ກົມສາມັນສຶກສາ, 2022, ໜ້າ. 71-53).

## 3. ວິທີດຳເນີນການຄົ້ນຄວ້າ

ການສຶກສາຄັ້ງນີ້ເປັນການທົດລອງຂັ້ນເລີ່ມຕົ້ນ (pre-Experimental Research) ໂດຍໃຊ້ຮູບແບບການທົດລອງກຸ່ມດຽວທົດສອບກ່ອນຮຽນ ແລະຫຼັງຮຽນ(One-Group-Pretest-Posttest Design) (Nunan & Bailey, 2009) ໃນ 5 ດ້ານຄື: 1) ດ້ານເນື້ອໃນ, 2) ດ້ານກິດຈະກຳບົດບາດສົມມຸດ,3) ດ້ານຄວາມຮູ້ຄວາມສາມາດທາງພາສາອັງກິດ, 4) ດ້ານຜູ້ຮຽນ, 5) ດ້ານສື່ການຮຽນການສອນ ເພື່ອເປັນແນວທາງການຄົ້ນຄວ້າ ແລະເປັນຂໍ້ມູນໃນການວິເຄາະທາງສະຖິຕິ ເຊິ່ງດຳເນີນຕາມ 6 ໄລຍະດັ່ງນີ້:

- ໄລຍະທີ 1: ຂໍໜັງສືຂໍອະນຸຍາດທົດລອງຈາກໂຮງຮຽນ ເພື່ອຂໍຄວາມຮ່ວມມືໃນການດຳເນີນການທົດລອງການຄົ້ນຄວ້າ
- ໄລຍະທີ 2: ໄດ້ດຳເນີນການທົດສອບກ່ອນຮຽນ (Pre-Test) ໂດຍໃຫ້ນັກຮຽນເຮັດແບບທົດສອບເພື່ອວັດທັກສະການສົນທະນາພາສາອັງກິດ, ຈຳນວນ 4 ສະຖານນະການ.
- ໄລຍະທີ 3: ດຳເນີນການຮຽນການສອນໂດຍໃຊ້ກິດຈະກຳບົດບາດສົມມຸດ ຈຳນວນ 4 ບົດ
- ໄລຍະທີ 4: ໄດ້ດຳເນີນການທົດສອບຫຼັງການຮຽນ (Post Test) ໂດຍໃຫ້ນັກຮຽນເຮັດແບບທົດສອບເພື່ອວັດທັກສະການສົນທະນາພາສາອັງກິດໂດຍກົງ ເຊິ່ງເປັນແບບທົດສອບຊຸດດຽວກັບແບບທົດສອບກ່ອນ. ຈຳນວນ 4 ສະຖານນະການ.
- ໄລຍະທີ 5: ໃຫ້ນັກຮຽນຕອບແບບສອບຖາມກ່ຽວກັບຄວາມພໍໃຈຕໍ່ບົດຮຽນທີ່ໃຊ້ກິດຈະກຳສະແດງ

ບົດບາດ ເພື່ອພັດທະນາທັກສະການເວົ້າພາສາອັງກິດ ຈຳນວນ 1 ຊຸດ

- ໄລຍະທີ 6: ນຳຜົນຄະແນນໄປວິເຄາະສະຖິຕິ

*3.1 ປະຊາກອນ ແລະ ກຸ່ມຕົວຢ່າງ*

ປະຊາກອນ ທີ່ໃຊ້ໃນການວິໄຈຄັ້ງນີ້ ຄື: ນັກຮຽນຊັ້ນມັດທະຍົມສຶກສາປີທີ 6 ໂຮງຮຽນມັດທະຍົມສາທິດ ວິທະຍາໄລຄູສາລະວັນ ຈຳນວນ 30 ຄົນ

ກຸ່ມຕົວຢ່າງ ທີ່ໃຊ້ໃນການວິໄຈນີ້ ຄື ນັກຮຽນຊັ້ນມັດທະຍົມສຶກສາປີທີ 6 ໂຮງຮຽນມັດທະຍົມສາທິດວິທະຍາໄລຄູສາລະວັນ ທີ່ຮຽນວິຊາພາສາອັງກິດຈຳນວນ 1 ຫ້ອງຮຽນ ຈຳນວນນັກຮຽນ 30 ຄົນ ທີ່ໄດ້ມາໂດຍການເລືອກເຈາະຈົງ (Purposive Sampling)

*3.2 ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ*

1. ແຜນການຈັດການຮຽນການສອນ: ໂດຍໃຊ້ກິດຈະກຳບົດບາດສົມມຸດ ເພື່ອພັດທະນາຄວາມສາມາດໃນການສົນທະນາພາສາອັງກິດ ສຳລັບນັກຮຽນຊັ້ນມັດທະຍົມສຶກສາປີທີ 6ໂຮງຮຽນມັດທະຍົມສາທິດວິທະຍາໄລຄູສາລະວັນ ຈຳນວນ 4 ບົດຮຽນ

2. ແບບທົດສອບວັດຄວາມສາມາດໃນການສົນທະນາພາສາອັງກິດ: ເປັນການວັດຄວາມສາມາດໂດຍກົງຈຳນວນ 4 ຂໍ້, ໃຊ້ໃນການທົດສອບກ່ອນ ແລະ ຫຼັງການຮຽນ

3. ແບບສຳຫຼວດຄວາມພໍໃຈຂອງນັກຮຽນ: ຕໍ່ບົດຮຽນທີ່ໃຊ້ກິດຈະກຳບົດບາດສົມມຸດ ຈຳນວນ 20 ຂໍ້ ໃຊ້ແບບຂໍ້ຄວາມປະເມີນຄ່າ 5 ລະດັບ ຕາມແບບຂອງ Likert (1961) ໄດ້ແກ່

ລະດັບ 5 ໝາຍເຖິງ ເພິ່ງພໍໃຈຫຼາຍທີ່ສຸດ
ລະດັບ 4 ໝາຍເຖິງ ເພິ່ງພໍໃຈຫຼາຍ
ລະດັບ 3 ໝາຍເຖິງ ເພິ່ງພໍໃຈປານກາງ
ລະດັບ 2 ໝາຍເຖິງ ເພິ່ງພໍໃຈໜ້ອຍ
ລະດັບ 1 ໝາຍເຖິງ ເພິ່ງພໍໃຈໜ້ອຍທີ່ສຸດ

*3.3 ວິທີເກັບກຳຂໍ້ມູນ*

1) ຂຽນໜັງສືສະເໜີເພື່ອຂໍອະນຸຍາດທົດລອງຈາກໂຮງຮຽນເພື່ອຂໍຄວາມຮ່ວມມືໃນການດຳເນີນການທົດລອງຄັ້ງນີ້.

2) ໄດ້ອະທິບາຍຈຸດປະສົງຂອງການຈັດການຮຽນການສອນທີ່ໃຊ້ກິດຈະກຳສະແດງບົດບາດ ເພື່ອພັດທະນາທັກສະການເວົ້າພາສາອັງກິດ ສຳລັບນັກຮຽນກຸ່ມຕົວຢ່າງ ໂດຍໄດ້ຈັດຕຽມບົດຮຽນທັງໝົດ 4 ບົດ,ການທົດລອງໃຊ້ເວລາທັງໝົດ 4 ວັນ ວັນລະ 2 ຊົ່ວໂມງຕິດຕໍ່ກັນ ເນື່ອງຈາກການສະແດງບົດບາດຕ້ອງໃຊ້ເວລາໃນການກຽມຕົວ ແລະການສະແດງຕາມຂັ້ນຕອນ ລວມທັງໝົດ 8 ຊົ່ວໂມງ ຍັງບໍ່ທັນລວມເຖິງການທົດສອບ 4 ຊົ່ວໂມງ ເຊິ່ງນັກຮຽນຈະຕ້ອງເຮັດແບບທົດສອບກ່ອນຮຽນ 2 ຂໍ້ ຈາກທັງໝົດ 4 ຂໍ້ ໂດຍໃຊ້ແບບທົດສອບທີ່ວັດທັກສະການສົນທະນາໂດຍກົງໃນການທົດສອບທັກສະການສົນທະນາພາສາອັງກິດ ນັກຮຽນຈະໄດ້ຮັບສະຖານະການທີ່ກຳນົດໃຫ້ທັງໝົດ 4 ສະຖານະການ ແລະໃຫ້ນັກຮຽນແຕ່ລະຄູ່ຈັບສະຫຼາກເລືອກສະຖານະການພຽງ 2 ສະຖານະການ ຈາກນັ້ນ ນັກຮຽນຕ້ອງຕົກລົງກັນເລືອກບົດບາດ ແລະສົນທະນາຕາມສະຖານະການທີ່ຕົນເອງໄດ້ຮັບ ໂດຍໃຫ້ເວລາສະຖານະການລະ 3-5 ນາທີ ຕໍ່ 1 ຄູ່ ຫຼັງຈາກທີ່ນັກຮຽນແຕ່ລະຄູ່ສຳເລັດການທົດສອບແລ້ວ ຈະຖືກແຍກອອກໄປເພື່ອປ້ອງກັນການສອບຖາມຂໍ້ມູນເຊິ່ງກັນແລະກັນ ແລະເພື່ອຄວາມສະດວກໃນການດຳເນີນການທົດສອບ, ຫຼັງຈາກສຳເລັດການຮຽນ ນັກຮຽນໄດ້ດຳເນີນການທົດສອບຫຼັງຮຽນ ແລະໄດ້ຕອບແບບສອບຖາມກ່ຽວກັບຄວາມພໍໃຈຕໍ່ບົດຮຽນທີ່ໃຊ້ກິດຈະກຳສະແດງບົດບາດສົມມຸດ.

3) ໄດ້ດຳເນີນການທົດສອບກ່ອນຮຽນ (Pre-Test) ໂດຍໃຫ້ນັກຮຽນເຮັດແບບທົດສອບເພື່ອວັດທັກສະການສົນທະນາພາສາອັງກິດໂດຍ ຕາມລາຍລະອຽດທີ່ໄດ້ກ່າວມາຂ້າງເທິງ ໂດຍມີນັກວິໄຈ ຄູສອນພາສາອັງກິດ 3 ທ່ານ ເປັນຜູ້ປະເມີນແລະບັນທຶກຄະແນນ.

4) ດຳເນີນການຮຽນການສອນໂດຍໃຊ້ກິດຈະກຳບົດບາດສົມມຸດ ຈຳນວນ 4 ບົດ.

5) ໄດ້ດຳເນີນການທົດສອບຫຼັງການຮຽນ (Post Test) ໂດຍໃຫ້ນັກຮຽນເຮັດແບບທົດສອບເພື່ອວັດທັກສະການສົນທະນາພາສາອັງກິດໂດຍກົງ ເຊິ່ງເປັນແບບທົດສອບຊຸດດຽວກັບແບບທົດສອບກ່ອນຮຽນ ດັ່ງລາຍລະອຽດທີ່ໄດ້ກ່າວມາຂ້າງເທິງ ໂດຍຜູ້ວິໄຈ ຄູສອນພາສາອັງກິດ 1 ທ່ານ ເປັນຜູ້ປະເມີນແລະບັນທຶກຄະແນນ.

6) ໃຫ້ນັກຮຽນຕອບແບບສອບຖາມກ່ຽວກັບຄວາມພໍໃຈຕໍ່ບົດຮຽນທີ່ໃຊ້ກິດຈະກຳສະແດງບົດບາດ ເພື່ອພັດທະນາທັກສະການເວົ້າພາສາອັງກິດ.

7) ນຳຜົນຄະແນນໄປວິເຄາະສະຖິຕິ

*3.4 ການວິເຄາະຂໍ້ມູນ ແລະ ສະຖິຕິທີ່ໃຊ້ໃນການຄົ້ນຄ້ວາ*

1. ສະຖິຕິທີ່ໃຊ້ໃນການຫາປະສິດທິພາບຂອງບົດສອນຕາມເກນ

- ຄ່າສ່ວນຮ້ອຍ (Percentage)

$$P = \frac{f}{N} \times 100$$

$P$ ແທນ ສ່ວນຮ້ອຍ(ຮ້ອຍລະ)
$f$ ແທນ ຄວາມຖີ່ທີ່ຕ້ອງການແປງໃຫ້ເປັນຮ້ອຍລະ
$N$ ແທນ ຈຳນວນກຸ່ມຕົວຢ່າງ

- ຄ່າສະເລ່ຍ (Mean) ໂດຍໃຊ້ສູດຂອງ (ສົມນຶກ ພັດທິຍະທະນີ, 2003) ດັ່ງນີ້:

$$\overline{X} = \frac{\sum x}{N}$$

$\overline{X}$ ແທນໃຫ້ຄ່າສະເລ່ຍ
$\sum x$ ແທນໃຫ້ຜົນລວມຂອງຄະແນນທັງໝົດ
$N$ ແທນໃຫ້ຈຳນວນຂອງກຸ່ມຕົວຢ່າງທັງໝົດ

- ຄ່າຜັນປ່ຽນມາດຕະຖານ: (Standard Division) ໂດຍການນຳໃຊ້ສູດຂອງ (ບຸນຊົມ ສີສະອາດ, 2002, ໜ້າ. 81) ດັ່ງນີ້:

$$S.D = \sqrt{\frac{n\sum x^2 - (\sum X)^2}{n(n-1)}}$$

$S.D$ ແທນໃຫ້ຄ່າຜັນປ່ຽນມາດຕະຖານຂອງກຸ່ມຕົວຢ່າງ

X ແທນໃຫ້ຄະແນນແຕ່ລະຕົວ

N ແທນໃຫ້ຄະແນນໃນແຕ່ລະກຸ່ມ

$\sum$ ແທນໃຫ້ຜົນບວກລວມ

## 4. ຜົນການຄົ້ນຄວ້າ

*4. 1 ຂໍ້ມູນພື້ນຖານຂອງກຸ່ມຕົວຢ່າງ*

ປະຊາກອນທີ່ໃຊ້ເປັນກຸ່ມຕົວຢ່າງແມ່ນນັກຮຽນຊັ້ນມັດທະຍົມສຶກສາປີທີ 6 ໂຮງຮຽນມັດທະຍົມສາທິດວິທະຍາໄລຄູສາລະວັນ ຈຳນວນ 1 ຫ້ອງຮຽນ ຈຳນວນ 30 ຄົນ,ໃນນັ້ນມີເພດຍິງ 16 ຄົນ ແລະຊາຍ 14 ຄົນ. ກຸມຕົວຢ່າງແມ່ນ ມີອາຍຸລະຫວ່າງ 15-17 ປີມີຈຳນວນ 30 ຄົນ,ຍິງ 18 ຄົນ ໂດຍໄດ້ມາຈາກການເລືອກຕົວຢ່າງແບບເຈາະຈົງ (Purposive Sampling).

*4.1 ການປຽບທຽບຜົນສຳເລັດດ້ານທັກສະການສົນທະນາພາສາອັງກິດ ເພື່ອການສື່ສານ*

ຈາກການເກັບຂໍ້ມູນຈາກກຸ່ມຕົວຢ່າງຈຳນວນ 30 ຄົນ ໂດຍໃຊ້ແບບທົດສອບວັດທັກສະການສົນທະນາພາສາອັງກິດເພື່ອການສື່ສານ ທັງກ່ອນແລະຫຼັງການນຳໃຊ້ກິດຈະກຳບົດບາດສົມມຸດ ເພື່ອພັດທະນາທັກສະການສົນທະນາພາສາອັງກິດ ເຊິ່ງເປັນແບບທົດສອບທີ່ວັດທັກສະການສົນທະນາພາສາອັງກິດໂດຍກົງແລະ ເປັນຊຸດດຽວກັນ ຈຳນວນ 2 ສະຖານະການ, ຈາກທັງໝົດ 4 ສະຖານະການ ໂດຍໃຊ້ວິທີການຈັບສະຫຼາກ ມີຄະແນນເຕັມ 20 ຄະແນນ ຜົນການວິເຄາະຄວາມສາມາດທາງການສົນທະນາພາສາອັງກິດ ຂອງກຸ່ມຕົວຢ່າງພົບວ່າ: ຄະແນນຫຼັງຈາກການຮຽນການສອນໂດຍໃຊ້ກິດຈະກຳບົດບາດສົມມຸດຂອງກຸ່ມຕົວຢ່າງມີທັກສະການສົນທະນາພາສາອັງກິດ ສູງຂຶ້ນກວ່າກ່ອນຮຽນ.

ຕາຕະລາງ 1: ຄະແນນທົດສອບກ່ອນ ແລະ ຫຼັງ

| ນັກຮຽນຄົນທີ | ຄະແນນກ່ອນຮຽນ 20% | ຄະແນນຫຼັງຮຽນ 20% | ຄ່າຄວາມກ້າວໜ້າ |
|---|---|---|---|
| 1 | 10 | 18 | 8 |
| 2 | 9 | 16 | 7 |
| 3 | 9 | 16 | 7 |
| 4 | 12 | 18 | 6 |
| 5 | 9 | 15 | 6 |
| 6 | 13 | 18 | 5 |
| 7 | 12 | 18 | 6 |
| 8 | 10 | 15 | 5 |
| 9 | 10 | 17 | 7 |
| 10 | 9 | 18 | 9 |
| 11 | 10 | 17 | 7 |
| 12 | 8 | 16 | 8 |
| 13 | 10 | 17 | 7 |
| 14 | 10 | 18 | 8 |
| 15 | 10 | 19 | 9 |
| 16 | 10 | 17 | 7 |
| 17 | 10 | 17 | 7 |
| 18 | 11 | 17 | 6 |
| 19 | 11 | 18 | 7 |
| 20 | 10 | 17 | 7 |
| 21 | 10 | 17 | 7 |
| 22 | 11 | 19 | 8 |
| 23 | 10 | 16 | 6 |
| 24 | 11 | 18 | 7 |
| 25 | 12 | 17 | 5 |
| 26 | 11 | 16 | 5 |
| 27 | 10 | 17 | 7 |
| 28 | 11 | 18 | 7 |
| 29 | 11 | 18 | 7 |
| 30 | 9 | 16 | 7 |
| **Mean** | 10.33 | 17.30 | 6.9 |
| **S.D.** | 1.06 | 0.95 | |

ຈາກຕາຕະລາງທີ 1 ຂ້າງເທິງ ສະແດງໃຫ້ເຫັນວ່ານັກຮຽນທຸກຄົນມີທັກສະການສົນທະນາພາສາອັງກິດ ເພື່ອການສື່ສານເພີ່ມຂຶ້ນຫຼັງຈາກການນຳໃຊ້ກິດຈະກຳບົດບາດສົມມຸດໃນການຮຽນການສອນ ເຊິ່ງສາມາດວິເຄາະໄດ້ຈາກຄະແນນການທົດສອບທັກສະການສົນທະນາພາສາອັງກິດ ເພື່ອການສື່ສານ ທັງກ່ອນແລະຫຼັງການນຳໃຊ້ກິດຈະກຳບົດບາດສົມມຸດທີ່ມີຄະແນນສູງສຸດແລະຕ່ຳສຸດ ໂດຍກ່ອນຮຽນມີຄະແນນສູງສຸດ 13 ຄະແນນ ແລະ ຕ່ຳສຸດ 8 ຄະແນນ ໃນຂະນະທີ່ຫຼັງຮຽນມີຄະແນນສູງສຸດ 19 ຄະແນນ ແລະ ຕ່ຳສຸດ 15 ຄະແນນ ຈາກຄະແນນເຕັມ 20 ຜົນການທົດສອບຫຼັງຮຽນພົບວ່າ ນັກຮຽນທີ່ມີຄວາມແຕກຕ່າງຂອງຄະແນນສູງສຸດມີຄ່າເທົ່າກັບ 9 ຄະແນນ ຈຳນວນ 2 ຄົນ (ຄິດເປັນ 6.67%) ແລະ ຄວາມແຕກຕ່າງຕ່ຳສຸດຢູ່ທີ່ 5 ຄະແນນ ຈຳນວນ 4 ຄົນ (ຄິດເປັນ 13.33%) ໂດຍສ່ວນໃຫຍ່ນັກຮຽນມີຄະແນນຢູ່ລະຫວ່າງ 15 ຫາ 18 ຄະແນນ ຈຳນວນ 24 ຄົນ (ຄິດເປັນ 80.00%)

*4.2 ຄ່າສະເລ່ຍຂອງຄະແນນທີ່ໄດ້ຈາກການວັດທັກສະການສົນທະນາພາສາອັງກິດ ສໍາລັບການສື່ສານ ແບ່ງຕາມເກນຫົວຂໍ້ເກນການປະເມີນກ່ອນຮຽນ ແລະ ຫຼັງຮຽນ.*

ຕາຕະລາງ 2: ຄ່າສະເລ່ຍການປະເມີນກ່ອນ ແລະ ຫຼັງ

| **ຫົວຂໍ້ເກນການປະເມີນ** | **ກ່ອນຮຽນ** | | **ຫຼັງຮຽນ** | | **ຄວາມແຕກຕ່າງ** |
|---|---|---|---|---|---|
| | Mean | S.D | Mean | S.D | D |
| ຄວາມຖືກຕ້ອງ | 3.63 | 0.61 | 6.63 | 0.61 | 3.00 |
| ຄວາມຄ່ອງແຄ້ວ | 4.00 | 0.64 | 7.07 | 0.69 | 3.07 |
| ທ່າທາງນໍ້າສຽງປະກອບການເວົ້າ | 2.70 | 0.79 | 3.60 | 0.56 | 0.90 |
| **ລວມ** | **10.33** | **2.04** | **17.30** | **1.86** | **1.86** |

ເຫັນວ່າ ຄ່າສະເລ່ຍຂອງຄະແນນທີ່ໄດ້ຈາກການວັດທັກສະການສົນທະນາພາສາອັງກິດ ເພື່ອການສື່ສານ ຄະແນນເຕັມ 20 ຄະແນນ ໂດຍແບ່ງຕາມເກນການປະເມີນກ່ອນຮຽນແລະຫຼັງຮຽນເປັນຫົວຂໍ້ເກນການປະເມີນ ເລື່ອງລາວຈາກຫຼາຍໄປໜ້ອຍດັ່ງນີ້ ຄ່າສະເລ່ຍດ້ານຄວາມຄ່ອງແຄ້ວ (Fluency) ຫຼັງຮຽນ (Mean = 7.07, S.D. = 0.69) ສູງກວ່າກ່ອນຮຽນ (Mean = 4.00, S.D. = 0.64) ເທົ່າກັບ 3.07 ຄະແນນ (ຄິດເປັນເປີເຊັນ 48.33) ຕໍ່ມາຄືຄ່າສະເລ່ຍດ້ານຄວາມຖືກຕ້ອງ (Accuracy) ໂດຍມີຄ່າສະເລ່ຍຫຼັງຮຽນ (Mean = 6.63, S.D. = 0.61) ສູງກວ່າກ່ອນຮຽນ (Mean = 3.63, S.D. = 0.61) ເທົ່າກັບ 3.00 ຄະແນນ (ຄິດເປັນຮ້ອຍລະ 37.5) ລໍາດັບສຸດທ້າຍຄືດ້ານທ່າທາງນໍ້າສຽງປະກອບການເວົ້າ(Gesture) ໂດຍນັກຮຽນໄດ້ຄະແນນສະເລ່ຍຫຼັງຮຽນ (Mean = 3.60, S.D. = 0.56) ສູງກວ່າກ່ອນຮຽນ (Mean = 2.70, S.D. = 0.79) ເທົ່າກັບ 0.90 ຄະແນນ (ຄິດເປັນເປີເຊັນ 14.17)

*4. 3 ການປຽບທຽບຄ່າສະເລ່ຍ (Mean), ຄ່າບ່ຽງເບນມາດຕະຖານ (S.D.) ແລະ ຄ່າຄວາມແຕກຕ່າງສະເລ່ຍ (D) ຂອງນັກຮຽນກຸ່ມຕົວຢ່າງ ກ່ອນ ແລະ ຫຼັງການຮຽນ*

ຕາຕະລາງ 3: ການປຽບທຽບຄ່າຕ່າງໆ

| ການທົດສອບ | ຄະແນນເຕັມ | Mean | S.D. | D | t |
|---|---|---|---|---|---|
| ກ່ອນຮຽນ | 20 | 10.33 | 1.06 | 6.9 | |
| ຫຼັງຮຽນ | 20 | 17.30 | 0.95 | | -26.76* |

ພົບວ່າຄ່າສະເລ່ຍຂອງຄະແນນທັກສະການສົນທະນາພາສາອັງກິດ ເພື່ອການສື່ສານໂດຍໃຊ້ກິດຈະກໍາບົດບາດສົມມຸດຂອງກຸ່ມຕົວຢ່າງຫຼັງຮຽນສູງກວ່າກ່ອນຮຽນໂດຍຄ່າສະເລ່ຍ (Mean) ຂອງຄະແນນຫຼັງຮຽນເທົ່າກັບ 17.30 ຄະແນນ (S.D. = 0.95) ໃນຂະນະທີ່ຄ່າສະເລ່ຍ (Mean) ຂອງຄະແນນກ່ອນຮຽນມີຄ່າເທົ່າກັບ 10.33 ຄະແນນ (S.D. = 1.06) ແລະ ຜົນຄວາມແຕກຕ່າງສະເລ່ຍຂອງຄະແນນສະເລ່ຍ (D) ມີຄ່າເທົ່າກັບ 6.9 ຄະແນນ,ຄ່າສະຖິຕິ t ເທົ່າກັບ -26.76 ສະຫຼຸບໄດ້ວ່າທັກສະການສົນທະນາພາສາອັງກິດ ເພື່ອການສື່ສານໂດຍໃຊ້ກິດຈະກໍາບົດບາດສົມມຸດຂອງກຸ່ມຕົວຢ່າງຫຼັງຮຽນສູງກວ່າກ່ອນຮຽນ.

*4.4 ຄວາມເພິ່ງພໍໃຈຂອງນັກຮຽນທີ່ໃຊ້ບົດບາດສົມມຸດໃນດ້ານເນື້ອໃນ*

ຈາກຜົນການສໍາຫຼວດຄວາມພໍໃຈຂອງນັກຮຽນກຸ່ມຕົວຢ່າງຕໍ່ບົດຮຽນໂດຍໃຊ້ກິດຈະກໍາບົດບາດສົມມຸດ ໃນດ້ານເນື້ອໃນ ພົບວ່ານັກຮຽນມີຄວາມພໍໃຈຢ່າງຍິ່ງໃນທຸກໆດ້ານ ໂດຍມີລາຍລະອຽດຂອງການປະເມີນດັ່ງ ໃນຕາຕະລາງລຸ່ມນີ້:

ຕາຕະລາງ 4: ຄວາມເພິ່ງພໍໃຈຂອງນັກຮຽນຕໍ່ດ້ານເນື້ອໃນ

| **ລາຍການປະເມີນ** | **Mean** | **S.D.** | **ລະດັບຄວາມເພິ່ງພໍໃຈ** |
|---|---|---|---|
| ດ້ານເນື້ອໃນ | 4.40 | 0.58 | ພໍໃຈຫຼາຍ |
| ບົດບາດສົມມຸດເປັນເນື້ອໃນທີ່ນັກຮຽນສາມາດໃຊ້ໃນຊີວິດປະຈໍາວັນ | 5.00 | 0.00 | ພໍໃຈຫຼາຍທີ່ສຸດ |
| ເນື້ອໃນບົດບາດສົມມຸດມີຄວາມໜ້າສົນໃຈ | 4.27 | 0.79 | ພໍໃຈຫຼາຍ |
| ເນື້ອໃນບົດບາດສົມມຸດມີຄວາມຍາກງ່າຍເໝາະສົມກັບລະດັບນັກຮຽນ | 4.27 | 0.74 | ພໍໃຈຫຼາຍ |
| ນັກຮຽນມີຄວາມເຂົ້າໃຈຮູບແບບພາສາ/ຄໍາສັບໄດ້ດີ | 4.07 | 0.79 | ພໍໃຈຫຼາຍ |

ຜົນການວິເຄາະຄວາມພໍໃຈຂອງນັກຮຽນດ້ານເນື້ອໃນມີຄ່າສະເລ່ຍຢູ່ໃນລະດັບພໍໃຈຫຼາຍ (Mean = 4.40, S.D. = 0.58) ໂດຍມີລາຍລະອຽດຕາມຄ່າສະເລ່ຍຫຼາຍໄປໜ້ອຍດັ່ງນີ້: ບົດບາດສົມມຸດເປັນເນື້ອໃນທີ່ນັກຮຽນພົບເຫັນໃນຊີວິດປະຈໍາວັນຢູ່ໃນລະດັບພໍໃຈຫຼາຍທີ່ສຸດ (Mean = 5.00, S.D. = 0.00) ແລະ ລາຍການປະເມີນຂໍ້ອື່ນໆຢູ່ໃນລະດັບພໍໃຈຈາກຫຼາຍໄປໜ້ອຍດັ່ງນີ້ຄື: ເນື້ອໃນບົດບາດສົມມຸດມີຄວາມໜ້າສົນໃຈ (Mean =

4.27, S.D. = 0.79) ຄວາມຫຍຸ້ງຍາກເໝາະສົມກັບລະດັບຂອງນັກຮຽນ (Mean = 4.27, S.D. = 0.74) ແລະ ນັກຮຽນເຂົ້າໃຈຮູບແບບພາສາ/ຄຳສັບໄດ້ດີ (Mean = 4.07, S.D. = 0.58) ນອກຈາກນີ້, ນັກຮຽນຍັງໃຫ້ຄວາມຄິດເຫັນເພີ່ມເຕີມກ່ຽວກັບກິດຈະກຳບົດບາດສົມມຸດໃນດ້ານນີ້ວ່າເປັນເນື້ອໃນທີ່ພົບເຫັນໃນຊີວິດປະຈຳວັນ ແລະ ເຂົ້າໃຈໄດ້ດີ ມີຄວາມໜ້າສົນໃຈ

*4.5 ຄວາມເພິ່ງພໍໃຈໃນດ້ານກິດຈະກຳບົດບາດສົມມຸດ*

ຜົນການປະເມີນຄວາມພໍໃຈຂອງນັກຮຽນຕໍ່ບົດຮຽນໂດຍໃຊ້ກິດຈະກຳບົດບາດສົມມຸດ ໃນດ້ານກິດຈະກຳບົດບາດສົມມຸດ ພົບວ່ານັກຮຽນມີຄວາມພໍໃຈຫຼາຍ ໂດຍມີລາຍລະອຽດຂອງການປະເມີນດັ່ງໃນຕາຕະລາງດັ່ງນີ້:

ຕາຕະລາງ 5: ຄວາມເພິ່ງພໍໃຈຂອງນັກຮຽນຕໍ່ດ້ານກິດຈະກຳ

| **ລາຍການປະເມີນ** | **Mean** | **S.D.** | **ລະດັບຄວາມເພິ່ງພໍໃຈ** |
|---|---|---|---|
| ດ້ານກິດຈະກຳບົດບາດສົມມຸດ | 4.90 | 0.22 | ພໍໃຈຫຼາຍທີ່ສຸດ |
| ນັກຮຽນສາມາດເອົາກິດຈະກຳບົດບາດສົມມຸດໄປໃຊ້ໃນຊີວິດປະຈຳວັນໄດ້ | 5.00 | 0.00 | ພໍໃຈຫຼາຍທີ່ສຸດ |
| ກິດຈະກຳບົດບາດສົມມຸດສອດເຄ່ອງກັບສະຖານະການທີ່ເກີດຂຶ້ນໃນຊີວິດປະຈຳວັນ | 5.00 | 0.00 | ພໍໃຈຫຼາຍທີ່ສຸດ |
| ກິດຈະກຳບົດບາດສົມມຸດກົງກັບຄວາມຕ້ອງການຂອງນັກຮຽນ | 4.83 | 0.38 | ພໍໃຈຫຼາຍທີ່ສຸດ |
| ກິດຈະກຳບົດບາດສົມມຸດກົງກັບຄວາມສົນໃຈຂອງນັກຮຽນ | 4.77 | 0.50 | ພໍໃຈຫຼາຍທີ່ສຸດ |

ຜົນການວິເຄາະຄວາມພໍໃຈຂອງນັກຮຽນກຸ່ມຕົວຢ່າງດ້ານກິດຈະກຳບົດບາດສົມມຸດ ມີຄ່າສະເລ່ຍຢູ່ໃນລະດັບພໍໃຈຫຼາຍທີ່ສຸດ (Mean = 4.90, S.D. = 0.22) ໂດຍກາພິຈາລະນາໃນລາຍລະອຽດແຕ່ລະລາຍການປະເມີນພົບວ່າ ນັກຮຽນມີຄວາມພໍໃຈຫຼາຍທີ່ສຸດທຸກຂໍ້ ຊຶ່ງມີຄ່າສະເລ່ຍຈັດລຽງລຳດັບດັ່ງນີ້: ນັກຮຽນສາມາດນຳກິດຈະກຳບົດບາດສົມມຸດໄປໃຊ້ໃນຊີວິດປະຈຳວັນໄດ້ຈິງ ແລະ ກິດຈະກຳບົດບາດສົມມຸດສອດຄ່ອງກັບສະຖານະການທີ່ເກີດຂຶ້ນໃນຊີວິດປະຈຳວັນ (Mean = 5.00, S.D. = 0.00) ນອກຈາກນີ້ ກິດຈະກຳບົດບາດສົມມຸດຕອບສະໜອງຄວາມຕ້ອງການຂອງນັກຮຽນ (Mean = 4.83, S.D. = 0.38) ແລະ ກິດຈະກຳບົດບາດສົມມຸດຕອບສະໜອງຄວາມສົນໃຈຂອງນັກຮຽນ (Mean = 4.77, S.D.= 0.50) ນອກຈາກນີ້ ນັກຮຽນຍັງໄດ້ສະແດງຄວາມຄິດເຫັນເພີ່ມເຕີມທີ່ມີຕໍ່ບົດບາດສົມມຸດໃນດ້ານກິດຈະກຳບົດບາດສົມມຸດໄວ້ວ່າ ເປັນເຫດການທີ່ສອດຄ່ອງກັບສະຖານະການທີ່ເກີດຂຶ້ນໃນຊີວິດປະຈຳວັນ ຕອບສະໜອງຄວາມສົນໃຈຂອງນັກຮຽນ

*4.6 ຄວາມເພິ່ງພໍໃຈດ້ານຄວາມຮູ້ຄວາມສາມາດທາງພາສາອັງກິດ*

ຜົນການປະເມີນຄວາມພໍໃຈຂອງນັກຮຽນທີ່ມີຕໍ່ບົດຮຽນໂດຍການນຳໃຊ້ກິດຈະກຳບົດບາດສົມມຸດ ໃນດ້ານຄວາມຮູ້ຄວາມສາມາດທາງພາສາອັງກິດ ພົບວ່ານັກຮຽນມີຄວາມພໍໃຈຢູ່ໃນລະດັບທີ່ພໍໃຈຫຼາຍທີ່ສຸດ ໂດຍມີລາຍລະອຽດລາຍການປະເມີນດັ່ງສະແດງໃນຕາຕະລາງດັ່ງນີ້:

ຕາຕະລາງ 6: ຄວາມເພິ່ງພໍໃຈຂອງນັກຮຽນຕໍ່ດ້ານຄວາມຮູ້

| **ລາຍການປະເມີນ** | **Mean** | **S.D.** | **ລະດັບຄວາມເພິ່ງພໍໃຈ** |
|---|---|---|---|
| ດ້ານຄວາມຮູ້ຄວາມສາມາດທາງພາສາອັງກິດ | 4.85 | 0.33 | ພໍໃຈຫຼາຍທີ່ສຸດ |
| ນັກຮຽນສາມາດນຳຄວາມຮູ້ພາສາອັງກິດໄປໃຊ້ໃນຊີວິດປະຈຳວັນໄດ້ | 5.00 | 0.00 | ພໍໃຈຫຼາຍທີ່ສຸດ |
| ກິດຈະກຳບົດບາດສົມມຸດຊ່ວຍພັດທະນາການເວົ້າພາສາອັງກິດຂອງນັກຮຽນໄດ້ດີ | 4.90 | 0.31 | ພໍໃຈຫຼາຍທີ່ສຸດ |
| ນກຮຽນມີຄວາມຮູ້ຄວາມເຂົ້າໃຈພາສາອັງກິດໄດ້ດີຂຶ້ນ | 4.77 | 0.57 | ພໍໃຈຫຼາຍທີ່ສຸດ |
| ກິດຈະກຳບົດບາດສົມມຸດສົ່ງເສີມໃຫ້ນັກຮຽນເກີດການຮຽນຮູ້ໄດ້ລາຍຂຶ້ນ | 4.73 | 0.45 | ພໍໃຈຫຼາຍທີ່ສຸດ |

ຜົນການວິເຄາະຄວາມພໍໃຈຂອງນັກຮຽນກຸ່ມຕົວຢ່າງດ້ານຄວາມຮູ້ຄວາມສາມາດທາງພາສາອັງກິດ ມີຄ່າສະເລ່ຍລວມຄວາມພໍໃຈຢູ່ໃນລະດັບພໍໃຈຫຼາຍທີ່ສຸດ (Mean = 4.85, S.D.= 0.33) ໂດຍການພິຈາລະນາໃນແຕ່ລະລາຍການປະເມີນພົບວ່ານັກຮຽນມີຄວາມພໍໃຈຫຼາຍທີ່ສຸດທຸກລາຍການ ຊຶ່ງມີຄ່າສະເລ່ຍຈັດລຽງລໍາດັບ ດັ່ງນີ້: ນັກຮຽນສາມາດນໍາຄວາມຮູ້ພາສາອັງກິດໄປໃຊ້ໃນຊີວິດປະຈໍາວັນໄດ້ຈິງ (Mean = 5.00, S.D.= 0.00) ກິດຈະກໍາບົດບາດສົມມຸດຊ່ວຍພັດທະນາທັກສະການເວົ້າພາສາອັງກິດຂອງນັກຮຽນໄດ້ດີ (Mean = 4.90 , S.D. = 0.31) ນັກຮຽນມີຄວາມຮູ້ຄວາມເຂົ້າໃຈພາສາອັງກິດໄດ້ດີຂຶ້ນ (Mean = 4.77, S.D.= 0.57) ກິດຈະກໍາບົດບາດສົມມຸດສົ່ງເສີມໃຫ້ນັກຮຽນເກີດການຮຽນຮູ້ໃນບົດຮຽນໄດ້ຫຼາຍຂຶ້ນ (Mean = 4.73, S.D.= 0.45) . ນອກຈາກນີ້ ນັກຮຽນຍັງໄດ້ໃຫ້ຂໍ້ສະເໜີແນະເພີ່ມເຕີມ ໃນສ່ວນທີ່ກ່ຽວຂ້ອງກັບກິດຈະກໍາບົດບາດສົມມຸດດ້ານຄວາມຮູ້ຄວາມສາມາດທາງພາສາອັງກິດໄວ້ວ່າ ເປັນກິດຈະກໍາທີ່ຊ່ວຍພັດທະນາທັກສະການເວົ້າພາສາອັງກິດໄດ້ດີ ນັກຮຽນມີຄວາມຮູ້ຄວາມເຂົ້າໃຈພາສາອັງກິດໄດ້ດີຂຶ້ນ.

*4.7 ຄວາມເພິ່ງພໍໃຈດ້ານຜູ້ຮຽນ*

ຜົນການປະເມີນຄວາມພໍໃຈຂອງນັກຮຽນກຸ່ມຕົວຢ່າງທີ່ມີຕໍ່ບົດຮຽນໂດຍການນໍາໃຊ້ກິດຈະກໍາບົດບາດສົມມຸດ ໃນດ້ານຜູ້ຮຽນ ພົບວ່ານັກຮຽນມີຄວາມພໍໃຈຢູ່ໃນລະດັບທີ່ພໍໃຈຫຼາຍທີ່ສຸດ ໂດຍມີລາຍລະອຽດລາຍການປະເມີນດັ່ງສະແດງໃນຕາຕະລາງດັ່ງນີ້:

ຕາຕະລາງ 7: ຄວາມເພິ່ງພໍໃຈຂອງນັກຮຽນຕໍ່ດ້ານຜູ້ຮຽນ

| **ລາຍການປະເມີນ** | **Mean** | **S.D.** | **ລະດັບຄວາມເພິ່ງພໍໃຈ** |
|---|---|---|---|
| **ດ້ານຜູ້ຮຽນ** | 4.78 | 0.49 | ພໍໃຈຫຼາຍທີ່ສຸດ |
| ບົດບາດສົມມຸດຊ່ວຍໃຫ້ນັກຮຽນສົນໃຈໃນການຮຽນຫຼາຍຂຶ້ນ | 4.93 | 0.25 | ພໍໃຈຫຼາຍທີ່ສຸດ |
| ບົດບາດສົມມຸດຊ່ວຍໃຫ້ນັກຮຽນມີທັດສະນະຄະຕິຕໍ່ການຮຽນພາສາອັງກິດຫຼາຍຂຶ້ນ | 4.80 | 0.55 | ພໍໃຈຫຼາຍທີ່ສຸດ |
| ບົດບາດສົມມຸດຊ່ວຍສ້າງແຮງຈູງໃຈໃນການຮຽນຂອງນັກຮຽນຫຼາຍຂຶ້ນ | 4.73 | 0.58 | ພໍໃຈຫຼາຍທີ່ສຸດ |
| ບົດບາດສົມມຸດຊ່ວຍສ້າງຄວາມໝັ້ນໃຈໃຫ້ນັກຮຽນໃຊ້ພາສາອັງກິດຫຼາຍຂຶ້ນ | 4.67 | 0.61 | ພໍໃຈຫຼາຍທີ່ສຸດ |

ຜົນການວິເຄາະຄວາມພໍໃຈຂອງນັກຮຽນກຸ່ມຕົວຢ່າງດ້ານຜູ້ຮຽນ ມີຄ່າສະເລ່ຍລວມຢູ່ໃນລະດັບພໍໃຈຫຼາຍທີ່ສຸດ (Mean = 4.78, S.D. = 0.49) ໂດຍການພິຈາລະນາໃນລາຍລະອຽດແຕ່ລະລາຍການປະເມີນພົບວ່າ ນັກຮຽນມີຄວາມພໍໃຈຫຼາຍທີ່ສຸດ ໃນທຸກຫົວຂໍ້ການປະເມີນ ໂດຍມີຄ່າສະເລ່ຍຈັດລຽງລໍາດັບດັ່ງນີ້: ບົດບາດສົມມຸດຊ່ວຍໃຫ້ນັກຮຽນສົນໃຈໃນການຮຽນຫຼາຍຂຶ້ນ (Mean = 4.93, S.D. = 0.25) ບົດບາດສົມມຸດຊ່ວຍໃຫ້ນັກຮຽນມີທັດສະນະຄະຕິຕໍ່ການຮຽນຮູ້ພາສາອັງກິດດີຂຶ້ນ (Mean = 4.80, S.D. = 0.55) ບົດບາດສົມມຸດຊ່ວຍສ້າງແຮງຈູງໃຈໃນການຮຽນຮູ້ຂອງນັກຮຽນຫຼາຍຂຶ້ນ (Mean = 4.73, S.D. = 0.58) ແລະ ບົດບາດສົມມຸດຊ່ວຍສ້າງຄວາມໝັ້ນໃຈໃຫ້ນັກຮຽນໃຊ້ພາສາອັງກິດໄດ້ຫຼາຍຂຶ້ນ (Mean = 4.67, S.D. = 0.61) . ນອກຈາກນີ້ ນັກຮຽນຍັງໄດ້ໃຫ້ຂໍ້ສະເໜີແນະເພີ່ມເຕີມກ່ຽວກັບກິດຈະກໍາບົດບາດສົມມຸດໃນດ້ານຜູ້ຮຽນໄວ້ວ່າ ເຮັດໃຫ້ນັກຮຽນສົນໃຈການຮຽນຫຼາຍຂຶ້ນ ຊ່ວຍສ້າງຄວາມໝັ້ນໃຈໃນການໃຊ້ພາສາອັງກິດໄດ້ຫຼາຍຂຶ້ນ.

*4.8 ຄວາມເພິ່ງພໍໃຈດ້ານສື່ການຮຽນການສອນ*

ຜົນການປະເມີນຄວາມພໍໃຈຂອງນັກຮຽນກຸ່ມຕົວຢ່າງທີ່ມີຕໍ່ບົດຮຽນໂດຍການນໍາໃຊ້ກິດຈະກໍາບົດບາດສົມມຸດ ໃນດ້ານສື່ການຮຽນການສອນ ພົບວ່ານັກຮຽນມີຄວາມພໍໃຈຢູ່ໃນລະດັບທີ່ພໍໃຈຫຼາຍທີ່ສຸດ ໂດຍມີລາຍລະອຽດລາຍການປະເມີນດັ່ງສະແດງໃນຕາຕະລາງດັ່ງນີ້:

ຕາຕະລາງ 4: ຄວາມເພິ່ງພໍໃຈຂອງນັກຮຽນຕໍ່ດ້ານສື່ການສອນ

| **ລາຍການປະເມີນ** | **Mean** | **S.D.** | **ລະດັບຄວາມເພິ່ງພໍໃຈ** |
|---|---|---|---|
| ດ້ານສື່ການຮຽນການສອນ | 4.83 | 0.46 | ພໍໃຈຫຼາຍທີ່ສຸດ |
| ສື່ການສອນກະຕຸ້ນໃຫ້ນັກຮຽນສົນໃຈເນື້ອໃນບົດຮຽນຫຼາຍຂຶ້ນ | 4.90 | 0.30 | ພໍໃຈຫຼາຍທີ່ສຸດ |
| ສື່ການສອນມີຄວາມເໝາະສົມກັບໄວຂອງນັກຮຽນ | 4.87 | 0.43 | ພໍໃຈຫຼາຍທີ່ສຸດ |
| ສື່ການສອນຊ່ວຍສົ່ງເສີມທັກສະການເວົ້າພາສາອັງກິດຂອງນັກຮຽນໄດ້ຫຼາຍຂຶ້ນ | 4.83 | 0.46 | ພໍໃຈຫຼາຍທີ່ສຸດ |
| ສື່ການສອນຊ່ວຍໃຫ້ນັກຮຽນເຂົ້າໃຈບົດຮຽນໄດ້ງ່າຍຂຶ້ນ | 4.73 | 0.58 | ພໍໃຈຫຼາຍທີ່ສຸດ |

ຜົນການວິເຄາະຄວາມພໍໃຈຂອງນັກຮຽນກຸ່ມຕົວຢ່າງ ດ້ານສື່ການຮຽນການສອນ ມີຄ່າສະເລ່ຍລວມຢູ່ໃນລະດັບພໍໃຈຫຼາຍທີ່ສຸດ (Mean = 4.83, S.D. = 0.46) ໂດຍການພິຈາລະນາໃນລາຍລະອຽດແຕ່ລະລາຍການປະເມີນພົບວ່າ ນັກຮຽນມີຄວາມພໍໃຈຫຼາຍທີ່ສຸດໃນທຸກລາຍການ ໂດຍມີຄ່າສະເລ່ຍຈັດລຽງລຳດັບດັ່ງນີ້: ສື່ການຮຽນການສອນກະຕຸ້ນໃຫ້ນັກຮຽນສົນໃຈໃນເນື້ອຫາຫຼາຍຂຶ້ນ (Mean = 4.90, S.D. = 0.30) ສື່ການຮຽນການສອນມີຄວາມເໝາະສົມກັບອາຍຸຂອງນັກຮຽນ (Mean = 4.87, S.D. = 0.43) ສື່ການຮຽນການສອນຊ່ວຍສົ່ງເສີມທັກສະການເວົ້າຂອງນັກຮຽນໄດ້ຫຼາຍຂຶ້ນ (Mean = 4.83, S.D. = 0.46) ສື່ການຮຽນການສອນຊ່ວຍໃຫ້ນັກຮຽນເຂົ້າໃຈໃນບົດຮຽນໄດ້ງ່າຍຂຶ້ນ (Mean = 4.73, S.D. = 0.58) . ນອກຈາກນີ້ ນັກຮຽນຍັງໄດ້ໃຫ້ຂໍ້ສະເໜີແນະເພີ່ມເຕີມໃນສ່ວນທີ່ກ່ຽວຂ້ອງກັບກິດຈະກຳບົດບາດສົມມຸດ ໃນດ້ານສື່ການຮຽນການສອນໄວ້ວ່າ ຊ່ວຍໃຫ້ເຂົ້າໃຈບົດຮຽນໄດ້ງ່າຍຂຶ້ນ ແລະ ຊ່ວຍສົ່ງເສີມທັກສະການເວົ້າໄດ້ຫຼາຍຂຶ້ນ.

ຈາກຂໍ້ມູນການສຶກສາຄວາມພໍໃຈຂອງນັກຮຽນທີ່ມີຕໍ່ກິດຈະກຳບົດບາດສົມມຸດ ເພື່ອພັດທະນາທັກສະການເວົ້າພາສາອັງກິດເພື່ອການສື່ສານໃນທຸກດ້ານ ສະແດງໃຫ້ເຫັນວ່າ ນັກຮຽນມີຄວາມພໍໃຈຕໍ່ກິດຈະກຳບົດບາດສົມມຸດ ເພື່ອພັດທະນາທັກສະການເວົ້າພາສາອັງກິດເພື່ອການສື່ສານ ຢູ່ໃນລະດັບພໍໃຈຫຼາຍທີ່ສຸດ (Mean = 4.75, S. D. = 0.41)

## 5. ອະພິປາຍຜົນ

ນັກຮຽນຊັ້ນມັດທະຍົມສຶກສາປີທີ 6 ກຸ່ມຕົວຢ່າງຈຳນວນ 30 ຄົນ ທີ່ໄດ້ຮັບການສອນໂດຍໃຊ້ກິດຈະກຳສະແດງບົດບາດສົມມຸດ,ມີທັກສະການເວົ້າພາສາອັງກິດເພື່ອການສື່ສານເພີ່ມຂຶ້ນ ໂດຍພົບໄດ້ຈາກຄະແນນການທົດສອບຫຼັງຮຽນສູງກວ່າກ່ອນຮຽນໃນລະດັບ .05 .

**1) ດ້ານກິດຈະກຳສະແດງບົດບາດ:** ນັກຮຽນມີຄວາມພໍໃຈຫຼາຍທີ່ສຸດກັບບົດບາດສົມມຸດທີ່ ສອດຄ່ອງກັບສະຖານະການທີ່ເກີດຂຶ້ນໃນຊີວິດປະຈຳວັນ ກົງກັບຄວາມຕ້ອງການ ແລະ ຄວາມສົນໃຈຂອງນັກຮຽນ (Mean = 4.90, S.D. = 0.22) ແລະ ນັກຮຽນຍັງສາມາດນຳເອົາຄວາມຮູ້ທີ່ໄດ້ຈາກກິດຈະກຳສະແດງບົດບາດໄປໃຊ້ ໃນຊີວິດປະຈຳວັນໄດ້ ທັງນີ້ອາດເກີດຈາກການຄັດເລືອກບົດບາດສົມມຸດຕາມຫຼັກການແນວຄິດຂອງ Richards (2006) ທີ່ເວົ້າວ່າ ການໃຊ້ສະຖານະການທີ່ກ່ຽວຂ້ອງກັບສະຖານະການໃນຊີວິດປະຈຳວັນຈະມີສ່ວນສຳຄັນຫຼາຍໃນ ການສົ່ງເສີມໃຫ້ນັກຮຽນເກີດຄວາມສົນໃຈໃນການໃຊ້ພາສາ ແລະ ສົ່ງຜົນໃຫ້ເກີດການຮຽນຮູ້ພາສາໄດ້ດີຍິ່ງຂຶ້ນອີກ.

**3) ດ້ານສື່ການຮຽນການສອນ:** ນັກຮຽນມີຄວາມພໍໃຈຢູ່ໃນລະດັບສູງສຸດ (ຄ່າສະເລ່ຍ = 4.75, ຄ່າບ່ຽງເບນມາດຕະຖານ = 0.41) ອາດເນື່ອງມາຈາກການສະແດງບົດບາດສົມມຸດນັ້ນນັກຮຽນໄດ້ໃຊ້ສື່ຕົວຈິງປະກອບການສະແດງ ການແຕ່ງຕົວຕາມບົດບາດສົມມຸດ ລວມທັງການຈັດສະຖານະການທີ່ໃກ້ຄຽງກັບຄວາມເປັນຈິງ ເຊິ່ງເປັນປັດໄຈທີ່ສອດຄ່ອງກັບຄວາມຕ້ອງການ ແລະ ລັກສະນະສຳຄັນຂອງຜູ້ທີ່ໄດ້ແຕ່ງບົດບາດຕາມຈິນຕະນາການໃນຫົວຂໍ້ຕ່າງໆ ໂດຍສອດຄ່ອງກັບການຄົ້ນຄວ້າຂອງ ການຈະນາ ຄຸນາລັກ (2015) ທີ່ອ້າງອີງຈາກ Joyce and Weil (2001) ກ່າວເຖິງການສະແດງບົດບາດສົມມຸດວ່າ ເປັນກິດຈະກຳທີ່ສະໜັບສະໜູນການຮຽນຮູ້ໂດຍໃຊ້ປະສົບການໃນຮູບແບບຂອງການສະແດງບົດບາດສົມມຸດ.

**4) ດ້ານຜູ້ຮຽນ:** ກິດຈະກຳສະແດງບົດບາດສົມມຸດຊ່ວຍໃຫ້ນັກຮຽນມີຄວາມໝັ້ນໃຈໃນການໃຊ້ພາສາ ເຊິ່ງສອດຄ່ອງກັບແນວຄິດຂອງ Eckard ແລະ Mary Kearny. (1981), Harmer J. (1984), Littlewood (1981) ແລະ Revell (1979) ທີ່ເວົ້າວ່າ ການສະແດງບົດບາດສົມມຸດແມ່ນການສະແດງອອກທີ່ເປັນໄປຕາມທຳມະຊາດຂອງບຸກຄົນ ເຊິ່ງເປັນການຕອບສະໜອງຕໍ່ຜູ້ອື່ນໃນສະຖານະການທີ່ສົມມຸດຂຶ້ນ

**5) ດ້ານເນື້ອໃນ:** ນັກຮຽນມີຄວາມພໍໃຈສູງສຸດ ນອກຈາກເນື້ອໃນຂອງການສະແດງບົດບາດສົມມຸດມີຄວາມໜ້າສົນໃຈ ເປັນເລື່ອງທີ່ພົບເຫັນໃນຊີວິດປະຈຳວັນແລ້ວ, ຍັງມີລະດັບຄວາມຍາກງ່າຍທີ່ເໝາະສົມກັບລະດັບຂອງນັກຮຽນ ອາດເປັນຍ້ອນວ່ານັກຮຽນໄດ້ຝຶກໃຊ້ພາສາທີ່ບໍ່ຍາກເກີນໄປ ແລະ ຢູ່ໃນລະດັບຄວາມຮູ້ຂອງຕົນເອງ ສິ່ງຜົນໃຫ້ນັກຮຽນສາມາດນຳເອົາຄວາມຮູ້ທີ່ໄດ້ຮັບໄປປະຍຸກໃຊ້ໃນການສະແດງບົດບາດໃນສະຖານະການຕ່າງໆ ເຊິ່ງເນັ້ນໃຫ້ນັກຮຽນເຂົ້າໃຈຄວາມໝາຍຜ່ານການປະຕິບັດ ແລະ ການປະຕິບັດຈິງ ເຊິ່ງມີສ່ວນສຳຄັນໃນການຊ່ວຍໃຫ້ນັກຮຽນເຂົ້າໃຈເນື້ອຫາໄດ້ງ່າຍຂຶ້ນ ແລະ ເຂົ້າໃຈຮູບແບບ ແລະ ຄຳສັບໄດ້ດີຂຶ້ນພ້ອມທັງສາມາດນຳໃຊ້ພາສາໄດ້ຢ່າງຖືກຕ້ອງ ແລະ ເໝາະສົມ ເຊິ່ງໄດ້ໃຫ້ແນວຄິດກ່ຽວກັບການສະແດງບົດບາດສົມມຸດທີ່ຈະນຳມາໃຊ້ໃນການສອນວ່າ ການເລືອກສະຖານະການ ເປັນການກຳນົດສະຖານທີ່ຫຼື ເຄົ້າໂຄງເລື່ອງ ລວມທັງສະຖານະການອື່ນໆທີ່ຜູ້ສອນຕ້ອງການໃຫ້ນັກຮຽນສະແດງ ເພື່ອໃຫ້ສອດຄ່ອງກັບຈຸດປະສົງທີ່ວາງໄວ້ ພາລະງານຫຼືການມອບໝາຍຄວນມີລະດັບຄວາມຍາກງ່າຍທີ່ເໝາະສົມກັບລະດັບຂອງນັກຮຽນ.

## 6. ສະຫຼຸບຜົນ

ໃນການວິໄຈຄັ້ງນີ້ ໃຊ້ເວລາໃນການທົດລອງທັງໝົດ 4 ວັນ ວັນລະ 2 ຊົ່ວໂມງ ຊົ່ວໂມງລະ 50 ນາທີ ເຊິ່ງເປັນຊົ່ວໂມງຮຽນທີ່ຕໍ່ເນື່ອງກັນ, ເນື່ອງຈາກການສະແດງບົດບາດສົມມຸດຕ້ອງໃຊ້ເວລາໃນການກະກຽມແລະການສະແດງຕາມຂັ້ນຕອນ ລວມເວລາຮຽນທັງໝົດ 8 ຊົ່ວໂມງຮຽນ ເຊິ່ງຍັງບໍ່ລວມເວລາການເຮັດແບບທົດສອບກ່ອນຮຽນ ແລະ ຫຼັງຮຽນ ຈຳນວນຄັ້ງລະ 2 ຊົ່ວໂມງຮຽນ ລວມເວລາໃນການທົດລອງທັງໝົດ 14 ຊົ່ວໂມງຮຽນ ຫຼັງຈາກສິ້ນສຸດການຮຽນແລ້ວ ນັກຮຽນຈະໄດ້ເຮັດແບບ

ສອບຖາມຄວາມພໍໃຈທີ່ມີຕໍ່ບົດຮຽນທີ່ໃຊ້ກິດຈະກຳສະແດງບົດບາດສົມມຸດກ່ອນເລີ່ມຮຽນ ໄດ້ດຳເນີນການທົດສອບກ່ອນຮຽນ (Pre-Test) ໂດຍໃຫ້ນັກຮຽນເຮັດແບບທົດສອບວັດທັກສະການເວົ້າພາສາອັງກິດເພື່ອການສື່ສານໂດຍໃຊ້ກິດຈະກຳສະແດງບົດບາດ ໂດຍການຈັບສະຫຼາກ ຈຳນວນ 2 ສະຖານະການຈາກທີ່ກຳນົດໃຫ້ 4 ສະຖານະການ ໃຊ້ເວລາທົດສອບ 3-5 ນາທີຕໍ່ 1 ຄູ່ ໂດຍເງື່ອນໄຂການໃຫ້ຄະແນນຄື ມີຄະນະກາມະການປະເມີນ 3 ທ່ານ ປະກອບມີ ຜູ້ວິໄຈຊຶ່ງເຮັດໜ້າທີ່ເປັນຜູ້ສອນ ແລະ ຜູ້ປະເມີນ ຄູສອນພາສາອັງກິດ 1 ທ່ານ ເປັນຜູ້ປະເມີນ ບັນທຶກຄະແນນຫຼັງຈາກການທົດສອບ ກ່ອນຮຽນໄດ້ດຳເນີນການສອນໂດຍໃຊ້ກິດຈະກຳສະແດງບົດບາດ ຈຳນວນ 4 ບົດຮຽນ. ຫຼັງຈາກນັ້ນ ໃຫ້ນັກຮຽນເຮັດແບບທົດສອບວັດທັກສະການເວົ້າພາສາອັງກິດເພື່ອການສື່ສານໂດຍໃຊ້ກິດຈະກຳສະແດງບົດບາດຫຼັງຮຽນ (Post-Test) ຊຶ່ງເປັນແບບທົດສອບ ແລະ ວິທີການທົດສອບແບບດຽວກັບແບບທົດສອບກ່ອນຮຽນ ນຳຜົນຄະແນນທີ່ໄດ້ໄປວິເຄາະໂດຍໃຊ້ຄ່າ t-test (Paired sample t-test) ຫຼັງຈາກສິ້ນສຸດການຮຽນການສອນແລ້ວ ນັກຮຽນເຮັດແບບສອບຖາມຄວາມພໍໃຈທີ່ມີຕໍ່ບົດຮຽນທີ່ໃຊ້ກິດຈະກຳສະແດງບົດບາດ ນຳຜົນທີ່ໄດ້ມາຄິດໄລ່ຄ່າສະເລ່ຍ (Mean), ຄ່າຜັນປ່ຽນມາດຖານ (S.D.).

ຜົນການວິໄຈທີ່ສຳຄັນພົບວ່າ ຜົນສຳເລັດທາງດ້ານທັກສະການເວົ້າພາສາອັງກິດເພື່ອການສື່ສານຂອງນັກຮຽນຊັ້ນມັດທະຍົມສຶກສາປີທີ 6 ມີຄະແນນການທົດສອບຫຼັງຮຽນສູງກວ່າກ່ອນຮຽນຢ່າງມີຄວາມໝາຍທາງສະຖິຕິໃນລະດັບ .05 ຕາມຫົວຂໍ້ເກນການວັດທັກສະການເວົ້າພາສາອັງກິດເພື່ອການສື່ສານໃນແຕ່ລະຫົວຂໍ້ ພົບວ່ານັກຮຽນມີການພັດທະນາໄປໃນທິດທາງທີ່ດີຂຶ້ນໃນທຸກໆດ້ານ. ດັ່ງນີ້, ດ້ານຄວາມຄ່ອງແຄ້ວ (Fluency), ດ້ານຄວາມຖືກຕ້ອງ (Accuracy) ແລະ ດ້ານການສະແດງທ່າທາງນ້ຳສຽງປະກອບການເວົ້າ (Gesture) ຕາມລຳດັບ. ນອກຈາກນັ້ນ, ຜົນການສຶກສາຄວາມພໍໃຈທີ່ມີຕໍ່ບົດຮຽນທີ່ໃຊ້ກິດຈະກຳສະແດງບົດບາດເພື່ອພັດທະນາທັກສະການເວົ້າພາສາອັງກິດເພື່ອການສື່ສານ ພົບວ່ານັກຮຽນມີຄວາມພໍໃຈຢູ່ໃນລະດັບພໍໃຈຫຼາຍທີ່ສຸດ 5 ດ້ານ ຈັດລຳດັບດັ່ງນີ້ ດ້ານກິດຈະກຳສະແດງບົດບາດ ດ້ານຄວາມຮູ້ຄວາມສາມາດທາງພາສາອັງກິດ. ດ້ານສື່ການຮຽນການສອນ, ດ້ານຜູ້ຮຽນ, ດ້ານເນື້ອໃນ ພົບວ່ານັກຮຽນມີຄວາມພໍໃຈຢູ່ໃນລະດັບຫຼາຍ.

## 7. ຂໍ້ຈຳກັດຂອງການຄົ້ນຄ້ວາ

ໃນການດຳເນີນການວິໄຈໄດ້ພົບເຫັນຂໍ້ຈຳກັດໃນການຄົ້ນຄວ້າດັ່ງນີ້:

1) ລະດັບຄວາມຮູ້ພື້ນຖານດ້ານພາສາ ແລະ ຄຳສັບຂອງນັກຮຽນມີຄວາມແຕກຕ່າງກັນຢ່າງຫຼວງຫຼາຍ ສິ່ງຜົນກະທົບຕໍ່ຂໍ້ຈຳກັດດ້ານເວລາ ແລະ ການນຳໃຊ້ພາສາໃນການສະແດງບົດບາດ ເພາະວ່າຈຳເປັນຕ້ອງໃຊ້ເວລາຫຼາຍເຊັ່ນ: ເວລາໃນການກຽມຕົວສະແດງບົດບາດ.
2) ຂະໜາດຂອງຫ້ອງຮຽນເປັນລັກສະນະໂຕະ, ຕັ່ງສຳລັບນັກຮຽນແບບບັນຍາຍເຕັມພື້ນທີ່ຫ້ອງ ເຮັດໃຫ້ນັກຮຽນມີພື້ນທີ່ບໍ່ໝາະສົມໃນການກຽມຕົວ ແລະ ການສະແດງເນື່ອງຈາກບາງສະຖານະການໃນການສະແດງຕ້ອງມີການເຄື່ອນໄຫວເດີນໄປມາ.
3) ຈຳນວນນັກຮຽນມີຫຼາຍ ເຮັດໃຫ້ນອກຈາກຈະໃຊ້ພື້ນທີ່ຫຼາຍແລ້ວ ຍັງຕ້ອງໃຊ້ເວລາຫຼາຍໃນແຕ່ລະກິດຈະກຳ ໃນຂະນະທີ່ເວລາຮຽນມີຈຳກັດ ເຊິ່ງການຮີບດ່ວນເຮັດກິດຈະກຳ ສິ່ງຜົນໃຫ້ຄວາມສົນໃຈຂອງນັກຮຽນໃນການເຂົ້າຮ່ວມກິດຈະກຳຫຼຸດລົງ.

## 8. ຂໍ້ສະເໜີແນະ

ຂໍ້ສະເໜີແນະທີ່ເປັນປະໂຫຍດຕໍ່ການປັບປຸງແລະພັດທະນາກິດຈະກຳສະແດງບົດບາດເພື່ອພັດທະນາທັກສະການເວົ້າພາສາອັງກິດ ມີດັ່ງນີ້:

1. ການວິໄຈທີ່ເກັບກາຂໍ້ມູນນອກຈາກໃນຫ້ອງຮຽນ ໂດຍອາດຈະພັດທະນາຮູບແບບກິດຈະກຳສະແດງບົດບາດທີ່ໃຫ້ນັກຮຽນໄດ້ໃຊ້ພາສາໃນສະຖານະການຈິງນອກຫ້ອງຮຽນ ເພື່ອສຶກສາຄວາມສາມາດໃນການນຳໃຊ້ພາສາໄດ້ດີ.

2. ຄວນມີການດາເນີນການວິໄຈໃນທັກສະອື່ນໆ ເຊັ່ນ: ທັກສະການອ່ານ ແລະ ການຂຽນ ໂດຍການນຳໃຊ້ກິດຈະກຳສະແດງບົດບາດສົມມຸດທີ່ນັກຮຽນສາມາດຂຽນບົດເອງ ໂດຍການເຊື່ອມໂຍງຄວາມຮູ້ທີ່ໄດ້ມາຈາກທັກສະການອ່ານ ແລະ ການຂຽນ.

## 9. ເອກະສານອ້າງອີງ


ກົມສ້າງຄູ, ສະຖາບັນຄົ້ນຄວ້າວະທະສາສາດການ ສຶກສາ, ສະຖາບັນຜູ້ບໍລິຫານການສຶກສາ ແລະ ກົມສາມັນສຶກສາ. (2022). *ເຕັກນິກຕ່າງໆເພື່ອເຮັດໃຫ້ການຮຽນມີປະສິດທິຜົນຍິ່ງຂຶ້ນ: ວິທີການສອນ.*

ກະຊວງສຶກສາທິການ ແລະກິລາ. (2021). *15 ເຕັກນິກການຮຽນການສອນ ເພື່ອເຮັດໃຫ້ການຮຽນມີປະສິດທິຜົນຍິ່ງຂຶ້ນ.* ກົມສາມັນ ແລະສະຖາຜູ້ບໍລິຫານການສຶກສາ.

ການນິກາ ການຈັນດາ. (2007). *ການໃຊ້ກິດຈະກຳບົດບາດສົມມຸດເພື່ອການສື່ສານເພື່ອສົ່ງເສີມຄວາມສາມາດໃນການຟັງ,ການເວົ້າພາສາອັງກິດແລະແຮງຈູງໃຈຂອງນັກຮຽນ.* ມະຫາວິທະຍາໄລຊຽງໃໝ່.

ບຸນຊົມ ສີສະອາດ. (2002). *ການວິໄຈຂັ້ນຕົ້ນ (ພິມຄັ້ງທີ 7).* ກຸງເທບ: ສີລິຍະສານ.

ລອ້ນ ສາຍຍົດ. (2000:186). *ການວັດແລະປະເມີນ.*

Brown, H. (2007). *Principle of language learning and teching .* New York: White plains: pearson longman.

Burn, A., & Joyce, H. (1997). *Focus on speaking .* Sysney: National Center for English Language Teaching and Research.

Eckard, E., & Kearny, M. (1981). *Language in education: Theory and practice. Teaching conversation skills in ESL.* Washington, Dc: Center for Applied Linguistics.

Joyee, B., & Weil, M. (2001). *Models of teaching(5th.ed).* Massachuetts: Pearson Allyn and Bacon.

Nunan, D. (2003). *Practical English language teaching.* McGraw-Hill Education.

Richards, J. (2006). *Communicative language teaching today.* Cambridge: Cambridge University press.